ກະຊວງແຜນການ ແລະ ການລົງທຶນ ອົງການຮ່ວມມືສາກົນຍີ່ປຸ່ນ ປະຈຳລາວ (ໄຈກ້າ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ການຮ່ວມມື ທາງດ້ານວິຊາການ ຂອງ ອົງການໄຈກ້າ

ສ ປ ປ ລາວ

ໂຄງການ ສົ່ງເສີມຄວາມສາມາດ ທາງດ້ານການຄຸ້ມຄອງໂຄງການລົງທຶນຂອງລັດ

(ພີແຄັບ 2)

# ບົດລາຍງານຄວາມຄືບໜ້າ
# (ປີທີ 4)

ກຸມພາ 2011

ໄອຊີແນັດ ຈຳກັດ

ໂຄງການຍົກລະດັບຄວາມສາມາດໃນການຄຸ້ມຄອງການລົງທຶນລັດ ໄລຍະ2 ( ພີແສັບ 2 )

# ບົດລາຍງານຄວາມຄືບໜ້າສຳລັບປີທີ ສີ່

ສາລະບານ


ຄຳສັບຫຍໍ້ ........................................................................................ ii

**1. ໂຄງຮ່າງຂອງໂຄງການ.......................................................................1**

*1.1. ສະພາບຂອງໂຄງການໂດຍລວມ.........................................................1*

*1.2 ໂຄງຮ່າງຂອງບົດລາຍງານ ...............................................................2*

**2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ .......................................4**

*2.1 ໂຄງຮ່າງຂອງການຈັດຝຶກອົບຮົມສຳລັບປີທີ 4.........................................4*

*2.2 ຜົນຂອງການຈັດຝຶກອົບຮົມ.................................................................6*

*2.3 ການລົງເລິກແຕ່ລະຫົວຂໍ້ .................................................................27*

**3. ຜົນສຳເລັດຂອງໝາກຜົນທີ່ຄາດໄວ້.......................................................35**

*3.1 [ໝາກຜົນທີ 1] ການຝຶກອົບຮົມ ແລະ ການລົງຕິດຕາມໜ້າວຽກ ...........................35*

*3.2 [ໝາກຜົນທີ 2] ການຄຸ້ມຄອງງົບປະມານແລະການຄຸ້ມຄອງການເງິນ .....................36*

*3.3 [ໝາກຜົນທີ 3] ການໃຫ້ຄຳປຶກສາກ່ຽວກັບກົດໝາຍວ່າດ້ວຍການລົງທຶນ.................37*

*3.4 [ໝາກຜົນທີ 4] ກິດຈະກຳສຳລັບການປັບປຸງວິທີການຄຸ້ມຄອງການລົງທຶນລັດ...........38*

**4. ຄວາມຄືບໜ້າໃນການບັນລຸຈຸດປະສົງຂອງໂຄງການ ...................................42**

**5. ຜົນກະທົບ......................................................................................43**

**6. ກິດຈະກຳທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ ...................................................43**

**7. ຫົວຂໍ້ອື່ນໆ.......................................................................................45**


**ເອກະສານຊ້ອນທ້າຍ :**

# ຄຳສັບຫຍໍ້

| | | |
|---|---|---|
| DAF | ພະແນກກະສິກຳ ແລະ ປ່າໄມ້ແຂວງ | (provincial) Department of Agriculture and Forestry |
| DEM | ພະແນກພະລັງງານ ແລະ ບໍ່ແຮ່ແຂວງ | (provincial) Department of Energy and Mining |
| DIC | ພະແນກອຸດສະຫະກຳ ແລະ ການຄ້າແຂວງ | (provincial) Department of Industry and Commerce |
| DLSW | ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ | (provincial) Department of Labor and Social Welfare |
| DOE | ພະແນກສຶກສາທິການແຂວງ | (provincial) Department Of Education |
| DOH | ພະແນກສາທາລະສຸກແຂວງ | (provincial) Department Of Health |
| DOIC | ພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ | (provincial) Department of Information and Culture |
| DPI | ພະແນກແຜນການ ແລະ ການລົງທຶນແຂວງ (ພຜທ) | (provincial) Department for Planning and Investment |
| DPWT | ພະແນກໂຍທາ ແລະຂົນສົ່ງແຂວງ | (provincial) Department of Public Works and Transportation |
| GOJ | ລັດຖະບານຍີ່ປຸ່ນ | Government of Japan |
| GOL | ລັດຖະບານລາວ | Government of Laos |
| JICA | ອົງການຮ່ວມມືສາກົນໄຈກາ | Japan International Cooperation Agency |
| JOCV | ອາສາສະໝັກຈາກອົງການຍີ່ປຸ່ນຮ່ວມມືກັບຕ່າງປະເທດ | Japan Overseas Cooperation Volunteer |
| MAF | ກະຊວງກະສິກຳ ແລະ ປ່າໄມ້ | Ministry of Agriculture and Forestry |
| MEM | ກະຊວງພະລັງງານ ແລະ ບໍ່ແຮ່ | Ministry of Energy and Mining |
| MIC | ກະຊວງອຸດສະຫະກຳ ແລະ ການຄ້າ | Ministry of Industry and Commerce |
| MLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | Ministry of Labor and Social Welfare |
| MOE | ກະຊວງສຶກສາທິການ | Ministry Of Education |
| MOH | ກະຊວງສາທາລະສຸກ | Ministry Of Health |
| MOIC | ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ | Ministry Of Information and Culture |
| MPI | ກະຊວງແຜນການ ແລະ ການລົງທຶນ (ກະຊວງ ຜທ) | Ministry of Planning and Investment |
| MPI-DIC | ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ | Department of International Cooperation, MPI |
| MPI-DOE | ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ | Department of Evaluation, MPI |
| MPI-DOOP | ກົມຈັດຕັ້ງ ແລະພະນັກງານ, ກະຊວງແຜນການ ແລະ ການລົງທຶນ | Department Of Organization and Personnel |
| MPI-DOP | ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ | Department of Planning, MPI |
| MPWT | ກະຊວງໂຍທາ ແລະຂົນສົ່ງ | Ministry of Public Works and Transportation |
| ODA | ທຶນຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ. | Official Development Assistance |
| ODA- | ທຶນສົມທົບກັບ ODA | National Contribution Budget for |

| | | |
|---|---|---|
| NCB | | Official Development Assistance projects |
| OJT | ການຝຶກອົບຮົມໜ້າວຽກ | On-the-Job Training |
| PCAP | ໂຄງການສ້າງຄວາມສາມາດໃນການຄຸ້ມຄອງແຜນງານການລົງທຶນລັດ | Project for Capacity Building in PIP Management |
| PCAP2 | ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງແຜນງານການລົງທຶນລັດ | Project for Enhancing Capacity in PIP Management |
| PIP | ແຜນງານການລົງທຶນລັດ | Public Investment Program |
| POT | ເຄືອຈຸດປະສົງແຜນງານ | Program Objective Tree |
| SPAS | ການປະເມີນແບບຂາດໂຕ (ແບບດ່ຽວ) | Simplified Project Assessment Sheet |
| SPIS | ແບບຟອມຂໍ້ມູນໂຄງການແບບກະທັດຮັດ | Simplified Project Information Sheet (for ODA projects) |
| TOT | ການຝຶກອົບຮົມເພື່ອສ້າງຄູຝຶກ | Training Of Trainers |

# 1. ໂຄງຮ່າງຂອງໂຄງການ

## 1.1. ສະພາບຂອງໂຄງການໂດຍລວມ

ລັດຖະບານລາວມີຈຸດມຸ້ງໝາຍເພື່ອຢາກພັດທະນາ ແລະ ນຳວິທີການຄຸ້ມຄອງ ການລົງທຶນລັດ (PIP) ປະກອບກັບການດຳເນີນການວາງແຜນ, ການປະເມີນ, ການຈັດຕັ້ງປະຕິບັດ, ແລະການປະເມີນຜົນທີ່ຮັດກຸມ ເຊິ່ງເປັນຂົງເຂດໜຶ່ງທີ່ສຳຄັນທີ່ສຸດທີ່ຕ້ອງການການປັບປຸງ. ອີງຕາມການຮ້ອງຂໍຂອງ ລັດຖະບານລາວ (GOL) ໄປຍັງລັດຖະບານຍີ່ປຸ່ນ (GOJ), ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA) ໄດ້ຈັດຕັ້ງການຮ່ວມມືທາງດ້ານເຕັກນິກ ພາຍໃຕ້ໂຄງການ ທີ່ເອີ້ນວ່າ: ໂຄງການສ້າງຄວາມສາມາດໃນການຄຸ້ມຄອງໂຄງການການລົງທຶນລັດ (PCAP) ເລີ່ມຈາກເດືອນ ທັນວາ 2004 ຫາ ເດືອນຕຸລາ 2007 ເຊິ່ງມີຈຸດປະສົງ ເພື່ອພັດທະນາບັນດາ ວິທີການຄຸ້ມຄອງແຜນງານການລົງທຶນລັດ (PIP) ແລະ ສ້າງຄວາມສາມາດຂອງ ພະນັກງານທີ່ ກ່ຽວຂ້ອງ.

ໂຄງການ (PCAP) ໄດ້ສຳເລັດລົງໃນເດືອນຕຸລາ 2007 ຕາມກຳນົດເວລາ. ແຕ່ລັດຖະບານລາວ ຮຽກຮ້ອງໃຫ້ສືບຕໍ່ ການສະໜັບສະໜູນ. ດ້ວຍເຫດນີ້ຈຶ່ງໄດ້ມີການຕົກລົງ ຈັດຕັ້ງໂຄງການເສີມສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງໂຄງການລົງທຶນລັດ (PCAP2) (ຈາກນີ້ໄປໃຊ້ຄຳວ່າ “ໂຄງການ”) ເຊິ່ງເປັນໂຄງການຮ່ວມມືທາງດ້ານເຕັກນິກໂຄງການໜຶ່ງຂອງອົງການໄຈກາ (JICA) ທີ່ສືບຕໍ່ປັບປຸງວິທີການ ແລະຂັ້ນຕອນການ ຄຸ້ມຄອງ PIP ແລະ ເຜີຍແຜ່ວິທີການແລະເຄື່ອງມືເຫຼົ່ານີ້ໂດຍ ຜ່ານອົງການຈັດຕັ້ງ ລັດຖະບານລະດັບຊາດ ແລະທ້ອງຖິ່ນ. ນອກນັ້ນ, ໂຄງການຍັງມີຈຸດມຸ້ງໝາຍ ເພື່ອຮັບປະກັນ ວ່າກະຊວງແຜນການ ແລະ ການລົງທຶນ (MPI) ຈະເປັນຜູ້ມີບົດບາດໃນການນຳພາ ບຳລຸງຮັກສາ ແລະ ຍົກລະດັບຄວາມສາມາດ ໃນການຄຸ້ມຄອງໂຄງການລົງທຶນລັດໃນທົ່ວປະເທດ, ໂຄງການດັ່ງກ່າວເລີ່ມຕົ້ນໃນເດືອນ ມີນາ 2008 ແລະຄາດວ່າຈະສຳເລັດໂຄງການໃນເດືອນສິງຫາ 2011.

## 1.2 ໂຄງຮ່າງຂອງບົດລາຍງານ

ບົດລາຍງານສະບັບນີ້ແມ່ນ ແນໃສ່ລາຍງານຄວາມຄືບໜ້າຂອງບັນດາກິດຈະກໍາທີ່ໄດ້ຖືກຈັດຕັ້ງປະຕິບັດເລີ່ມແຕ່ເດືອນ ຕຸລາ 2010 ເຖິງເດືອນມັງກອນ 2011 ແລະບົດລາຍງານສະບັບນີ້ ຍັງອະທິບາຍເຖິງລະດັບຄວາມສໍາເລັດຂອງ 4 ໝາກຜົນໄປພ້ອມໆກັບຈຸດປະສົງຂອງໂຄງການ. ຕາຕະລາງຂ້າງລຸ່ມນີ້ການສະຫຼຸບຫຍໍ້ໂຄງຮ່າງຂອງບົດລາຍງານ.

| |
|---|
| 1. ໂຄງຮ່າງຂອງໂຄງການ |
| ໂຄງຮ່າງຂອງໂຄງການ ແລະ ບົດສະຫຼຸບຂອງບົດລາຍງານນີ້ຖືກນໍາສະເໜີ |
| 2.1 ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ |
| ໂຄງການໄດ້ກ້າວເຂົ້າສູ່ປີສຸດທ້າຍແລ້ວ ແລະມັນໄດ້ດໍາເນີນໄປຢ່າງລາບລື້ນດີຕາມແຜນ ບັນດາກິດຈະກໍາທີ່ໄດ້ຈັດຕັ້ງປະຕິບັດຈາກເດືອນຕຸລາ 2011 ຫາເດືອນມັງກອນ 2011 ແມ່ນກະກຽມແລະຈັດຝຶກອົບຮົມທົ່ວປະເທດຄັ້ງສຸດທ້າຍຂອງໂຄງການ.<br><br>ເປົ້າໝາຍລວມຂອງການຈັດຝຶກອົບຮົມຄັ້ງນີ້ແມ່ນເພື່ອເຮັດໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຮັບຄວາມຮູ້ແລະທັກສະໃນພາກປະຕິບັດການຄຸ້ມຄອງໂຄງການລົງທຶນລັດ. ການຝຶກອົບຮົມດັ່ງກ່າວ ປະກອບດ້ວຍ 4 ໂປຣແກມແລະ 3ໃນ4 ໂປຣແກມໄດ້ສໍາເລັດທັນກັບເວລາຂຽນບົດລາຍງານນີ້.<br><br>- ຈັດສໍາມະນາກ່ຽວກັບການຍື່ນສະເໜີງົບປະມານແລະການຄຸ້ມຄອງທາງດ້ານເງິນເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 66 ທ່ານ.<br>- ຈັດຝຶກອົບຮົມການຄຸ້ມຄອງການລົງທຶນລັດສໍາລັບພະນັກງານຈາກພະແນກແຜນການແລະການລົງທຶນແລະກົມ/ພະແນກແຜນການກະຊວງ(TOT: ການອົບຮົມເພື່ອເປັນຄູຝຶກ)ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 138 ທ່ານ.<br>- ຈັດຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດສໍາລັບເຈົ້າຂອງໂຄງການເຊິ່ງມີຜູ້ເຂົ້າຮ່ວມ 811 ທ່ານ.<br>- ການລົງຊຸກຍູ້ແລະຕິດຕາມໜ້າວຽກສໍາລັບ ພຜທ ແຂວງ ແລະກົມ/ພະແນກແຜນການກະຊວງເຊິ່ງມີແຜນຈະຈັດຕັ້ງປະຕິບັດໃນເດືອນກຸມພາ ຫາເດືອນມີນາ 2011.<br><br>ການຈັດຝຶກອົບຮົມທັງ 3 ໂປຣແກມໄດ້ສິ້ນສຸດລົງຢ່າງປະສົບຜົນສໍາເລັດ ທັງຜູ້ບັນຍາຍ (ຄູຝຶກ) ແລະຜູ້ປະສານງານໄດ້ເຮັດໜ້າທີ່ຂອງຕົນໄດ້ດີ ເຮັດໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມມີຄວາມເຂົ້າໃຈດີ. ການປະເມີນການຝຶກອົບຮົມໂດຍລວມແຕ່ລະຄັ້ງແມ່ນໄດ້ຮັບຜົນສູງ ແລະ ໝາກຜົນຂອງການຝຶກອົບຮົມແມ່ນຄາດວ່າຈະຖືກນໍາໃຊ້ເຂົ້າໃນການສ້າງແຜນງົບປະມານການລົງທຶນລັດປະຈໍາປີ. |
| 3. ຄວາມຄືບໜ້າໃນການບັນລຸບັນດາໝາກຜົນຂອງໂຄງການ |
| ຄາດວ່າທຸກໆໝາກຜົນຈະສາມາດບັນລຸກ່ອນໂຄງການຈົບ<br><br>[ໝາກຜົນທີ 1: ການຝຶກອົບຮົມແລະການລົງຕິດຕາມໜ້າວຽກ] |

- ການຝຶກອົບຮົມທີ່ວປະເທດຄັ້ງສຸດທ້າຍແມ່ນດຳເນີນຢູ່ ແລະ ໝາກຜົນທີ່ຄາດວ່າຈະໄດ້ຮັບແມ່ນໃກ້ຈະບັນລຸ

[ໝາກຜົນທີ 2: ການຄຸ້ມຄອງງົບປະມານ ແລະ ການຄຸ້ມຄອງທາງດ້ານການເງິນການລົງທຶນລັດ]

- ມາຮອດປະຈຸບັນ, ພະນັກງານ ພຜທ ແຂວງສາມາດເຂົ້າໃຈວິທີການນຳໃຊ້ເຄື່ອງມືການຄຸ້ມຄອງທາງດ້ານການເງິນ ໝາກຜົນທີ່ຄາດວ່າຈະໄດ້ຮັບແມ່ນບັນລຸເກີນຄາດໝາຍ
- ແຕ່ເຖິງຢ່າງໃດກໍ່ຕາມ ເນື່ອງຈາກເຄື່ອງມືການຄຸ້ມຄອງທາງດ້ານການເງິນຍັງບໍ່ທັນຖືກນຳໃຊ້ຢ່າງເປັນທາງການເຂົ້າໃນການສ້າງແຜນສະເໜີຂໍງົບປະມານປະຈຳປີ. ສະນັ້ນ ມັນຍັງຮຽກຮ້ອງຕ້ອງການການເຜີຍແຜ່ເຄື່ອງມືດັ່ງກ່າວ

[ໝາກຜົນທີ 3: ການຊ່ວຍໃຫ້ຄຳປຶກສາກ່ຽວກັບກົດໝາຍວ່າດ້ວຍການລົງທຶນລັດ]

- ກົດໝາຍວ່າດ້ວຍການລົງທຶນລັດມີຜົນສັກສິດຕັ້ງແຕ່ເດືອນ 12/2009 ດຳລັດການຈັດ ຕັ້ງປະຕິບັດກົດໝາຍຂອງນາຍົກລັດຖະມົນຕີກຳລັງດຳເນີນການແລະຄາດວ່າຈະຖືກ ອະນຸມັດພາຍໃນເດືອນພຶດສະພາ 2011 ນີ້.
- ປຶ້ມກົດໝາຍວ່າດ້ວຍການລົງທຶນລັດໄດ້ຖືກຈັດພິມແລະແຈກຢາຍໃຫ້ແກ່ຜູ້ເຂົ້າຮ່ວມຝຶກອົບຮົມສຳມະນາທຸກໆທ່ານ.

[ ໝາກຜົນທີ 4: ການປັບປຸງວິທີການຄຸ້ມຄອງການລົງທຶນລັດ]

- ໄດ້ສຳເລັດການດຳເນີນການພັດທະນາວິທີການຄຸ້ມຄອງການລົງທຶນລັດແລະບັນດາ ວິທີການດັ່ງກ່າວ ໄດ້ຖືກເຜີຍແຜ່ໂດຍຜ່ານການຝຶກອົບຮົມ. ຈະໄດ້ມີການຕິດຕາມກວດກາການນຳໃຊ້ບັນດາວິທີການ ແລະ ເຄື່ອງມືການຄຸ້ມຄອງການລົງທຶນລັດໃນ ການສ້າງແຜນງົບປະມານປະຈຳປີ 2011-2012 ນີ້ ແລະປຶ້ມຄູ່ມືການນຳໃຊ້ສະບັບສົມບູນຈະໄດ້ຖືກຈັດພິມເປັນຄັ້ງສຸດທ້າຍ.

## 4. ຄວາມຄືບໜ້າກ່ຽວກັບການບັນລຸຈຸດປະສົງຂອງໂຄງການ

ການບັນລຸຈຸດປະສົງຂອງໂຄງການ ຈະຖືກກຳນົດໂດຍຜ່ານການຈັດຕັ້ງປະຕິບັດການຄຸ້ມຄອງການລົງທຶນລັດຂອງກະຊວງແຜນການ, ພະແນກແຜນການ ແລະ ການລົງທຶນ, ກົມແຜນການຂອງບັນດາກະຊວງ ແລະ ບັນດາເຈົ້າຂອງໂຄງການໃນການສ້າງແຜນງົບປະມານປະຈຳສົກປີ 2011-2012 ແລະ ການເຮັດສຳເລັດພາລະບົດບາດຂອງພວກເຂົາເຈົ້າໃນການສ້າງແຜນງົບປະມານປະຈຳສົກປີ 2011-12

## 5. ຜົນກະທົບ

ເປົ້າໝາຍລວມຂອງໂຄງການຈະສາມາດວັດໄດ້ກໍ່ຕໍ່ເມື່ອໂຄງການເປັນຜົນເຊິ່ງສາມາດເຫັນໄດ້ ພາຍຫຼັງໂຄງການຈົບ. ດັ່ງນັ້ນ ຈິ່ງບໍ່ສາມາດກຳນົດລະດັບຜົນສຳເລັດໄດ້ໃນຄະນະນີ້. ແຕ່ພວກເຮົາສາມາດເຫັນແນວໂນ້ມຂອງຜົນສຳເລັດໄປໃນທາງບວກ ໂດຍການເບິ່ງຜົນຂອງບັນດາກິດຈະກຳຂອງໂຄງການ.

## 6. ກິດຈະກຳທີ່ຍັງບໍ່ທັນໄດ້ປະຕິບັດ

ການລົງຕິດຕາມໜ້າວຽກ,ປັບປຸງບັນດາຄູ່ມື,ການຝຶກອົບຮົມຢູ່ປະເທດທີ 3(ມາເລເຊັຍ)ການປະ ເມີນຜົນທ້າຍເທີມ ແລະສະຫຼຸບສຳມະນາແມ່ນບັນດາກິດຈະກຳຫຼັກທີ່ຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດ.

## 7. ຫົວຂໍ້ອື່ນໆ

| |
|---|
| ອາສາສະມັກຂອງອົງການຍີ່ປຸ່ນຮ່ວມມືກັບຕ່າງປະເທດໄດ້ເຂົ້າຮ່ວມການຝຶກອົບຮົມທົ່ວປະເທດ |

## *2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ*

ໂຄງການໄດ້ກ້າວເຂົ້າສູ່ປີສຸດທ້າຍ ແລະໄດ້ມີການດຳເນີນໂຄງການຢ່າງລາບລື້ນຕາມແຜນ ໃນຂໍ້ນີ້ຈະອະທິບາຍເຖິງໂຄງຮ່າງ ແລະຜົນຂອງການຈັດຝຶກອົບຮົມທົ່ວປະເທດຄັ້ງສຸດທ້າຍ, ເນື່ອງຈາກບັນດາກິດຈະກຳໃນຊ່ວງເດືອນຕຸລາ 2011 ຫາເດືອນມັງກອນ 2011 ແມ່ນສຸມໃສ່ ການກະກຽມແລະຈັດຝຶກອົບຮົມດັ່ງກ່າວ.

### *2.1 ໂຄງຮ່າງຂອງການຈັດຝຶກອົບຮົມສຳລັບປີທີ 4*

ວັດຖຸປະສົງລວມຂອງການຈັດຝຶກອົບຮົມແມ່ນ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຄວາມຮູ້ ແລະທັດສະໃນທາງປະຕິບັດການຄຸ້ມຄອງການລົງທຶນຂອງລັດ. ຄາດວ່າອົງການຈັດຕັ້ງເປົ້າໝາຍໃນການຈັດຝຶກອົບຮົມໃນຄັ້ງນີ້ຈະສາມາດ ກະກຽມການສະເໜີຂໍງົບປະມານການລົງທຶນລັດ ປະຈຳສົກປີ 2011-12 ພ້ອມກັບການດຳເນີນການສ້າງແຜນງົບປະມານ ໂດຍອີງຕາມບັນດາປຶ້ມຄູ່ມື

**[ທິດທາງການຝຶກອົບຮົມ]**

(1) ສຸມໃສ່ການໄຫຼວຽນ (ວົງຈອນ) ຂອງຂັ້ນຕອນການສະເໜີຂອງງົບປະມານປະຈຳປີ
(2) ຍົກສູງຄວາມສາມາດຂອງພະແນກງານພະແນກແຜນການ ແລະ ການລົງທຶນແຂວງ (DPI) ໃນການຄຸ້ມຄອງການລົງທຶນຂອງລັດ.
(3) ທົດລອງສຸມໃສ່ 8 ຂະແໜງການຫຼັກເພື່ອຍົກສູງຄວາມຄຸ້ມຄ່າໃນການລົງທຶນ

ຕ່າງໆທີ່ຖືກພັດທະນາຂຶ້ນໂດຍກະຊວງແຜນການ ແລະ ໂຄງການພີແຄັບ 2 (PCAP 2). ໂດຍການສັງລວມເອົາວັດຖຸປະສົງລວມດັ່ງກ່າວ ແລະ ຜົນການປະເມີນການຝຶກອົບຮົມທີ່ຜ່ານມາ (ທີ່ຈັດຂຶ້ນໂດຍໂຄງການ), ທິດທາງຂອງການຝຶກອົບຮົມສຳລັບປີທີ 4ນີ້ແມ່ນໄດ້ຖືກສ້າງຂຶ້ນເຊິ່ງໄດ້ສະແດງອອກດັ່ງລຸ່ມນີ້:

**ການຝຶກອົບຮົມປະກອບດ້ວຍ 4 ໂປຣແກມລຸ່ມນີ້:**

[ໂປຣແກມການຈັດຝຶກອົບຮົມສຳລັບປີທີ 4 ຂອງໂຄງການພີແຄັບ 2]

(1) ສຳມະນາກ່ຽວກັບການດຳເນີນການລົງທຶນລັດແລະການຄຸ້ມຄອງທາງດ້ານການເງິນ

(2) ການຝຶກອົບຮົມກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດສຳລັບພະນັກງານ ພຜທ ແຂວງ ແລະ

| |
|---|
| ກົມ/ພະແນກແຜນການຂອງບັນດາກະຊວງ (ຝຶກອົບຮົມເພື່ອສ້າງໃຫ້ເປັນຄູຝຶກ (TOT))<br>(3) ການຝຶກອົບຮົມກ່ຽວກັບການຄຸ້ມຄອງການລົງທຶນລັດສຳລັບບັນດາເຈົ້າຂອງໂຄງການ.<br>(4) ການລົງຕິດຕາມໜ້າວຽກກັບ ພຜທ ແຂວງແລະກົມ/ພະແນກແຜນການຂອງບັນດາກະຊວງ. |

ໂປຣແກມການຝຶກອົບຮົມ(1), (2) ແລະ(3) ແມ່ນໄດ້ຖືກຈັດຕັ້ງປະຕິບັດຢ່າງປະສົບຜົນສຳເລັດໂດຍມີວັດຖຸປະສົງ ແລະ ກຸ່ມຄົນເປົ້າໝາຍທີ່ສະແດງໃນຕາຕະລາງລຸ່ມນີ້:

| No. ໂປຣແກມ | ວັດຖຸປະສົງ | ກຸ່ມເປົ້າໝາຍ |
|---|---|---|
| (1) | 1) ພະນັກງານພະແນກແຜນການ ສາມາດສ້າງທິດທາງ ງົບປະມານປະຈຳປີ, ກຳນົດຕາຕະລາງຂັ້ນຕອນສະເໜີງົບປະມານ, ແລະ ໂຄງຮ່າງງົບ ປະມານຂອງແຂວງ ພ້ອມກັບການນຳພາຈາກຫົວໜ້າພະແນກ<br>2) ພະນັກງານພະແນກແຜນການ ແລະການລົງທຶນເຂົ້າໃຈຄວາມສຳຄັນຂອງການຄຸ້ມຄອງທາງດ້ານການເງິນ ແລະ ສາມາດນຳໃຊ້ຕົວຊີ້ວັດຫລັກຂອງການຄຸ້ມຄອງທາງດ້ານການເງິນ | ພະນັກງານຈາກພະແນກແຜນການ ແລະການລົງທຶນຂອງນະຄອນຫຼວງ ແລະ 16 ແຂວງ |
| (2) | 1) ພະນັກງານພະແນກແຜນການ ແລະ ການລົງທຶນແຂວງ ແລະ ກົມ/ພະແນກແຜນການກະຊວງ ເຂົ້າໃຈໃນຂັ້ນຕອນການສະເໜີຂໍງົບປະມານ ແລະ ການນຳໃຊ້ວິທີການຄຸ້ມຄອງ<br>2) ພະນັກງານພະແນກແຜນການ ແລະ ການລົງທຶນແຂວງ ແລະ ກົມ/ພະແນກແຜນການກະຊວງສາມາດອະທິບາຍໃຫ້ແກ່ເຈົ້າຂອງໂຄງການ ແລະ ພະນັກງານຂັ້ນເມືອງໃຫ້ເຂົ້າໃຈກ່ຽວກັບທຸກໆ ວິທີການທີ່ຕ້ອງນຳໃຊ້ໃນການຄຸ້ມຄອງ<br>3) ພະນັກງານພະແນກແຜນການ ແລະ ການລົງທຶນແຂວງ ແລະ ກົມ/ພະແນກແຜນການກະຊວງສາມາດສະເໜີທິດທາງ ສຳລັບງົບປະມາປະຈຳປີ, ກຳນົດຕາຕະລາງ ຂັ້ນຕອນການສະເໜີຂໍງົບປະມານ ແລະ ໂຄງຮ່າງຂອງງົບປະມານ ແລະ ລາຍງານໃຫ້ຫົວໜ້າພະແນກຮັບຮູ້ | - ພະນັກງານຈາກພະແນກແຜນການ ແລະການລົງທຶນຂອງນະຄອນຫຼວງ ແລະ 16 ແຂວງ ແລະ<br>- ພະນັກງານຈາກກົມ/ພະແນກການຂອງ8 ກະຊວງຫຼັກ (MAF, MPWT, MIC, MEM, MOE, MOH, MOIC, MLSW)[1] |
| (3) | 1) ບັນດາພະແນກສາມາດສ້າງທິດທາງ ງົບປະມານປະຈຳປີ, ກຳນົດຕາຕະລາງຂັ້ນຕອນສະເໜີຂໍງົບປະມານ ແລະ ໂຄງຮ່າງງົບປະມານຂອງຂະແໜງການ ໂດຍການນຳພາ ຂອງຫົວໜ້າພະແນກ | ພະນັກງານຈາກ 8 ພະແນກການຫຼັກຂັ້ນໃນນະຄອນຫຼວງ ແລະ16 ແຂວງ (DAF, DPWT, DIC, |

[1] MAF: ກະຊວງກະສິກຳປ່າໄມ້, MPWT: ກະຊວງໂຍທາທິການ ແລະ ຂົນສົ່ງ, MIC: ກະຊວງອຸດສາຫະກຳການຄ້າ, MEM: ກະຊວງພະລັງງານ ແລະ ບໍ່ແຮ່, MOE: ກະຊວງສຶກສາທິການ, MOH: ກະຊວງສາທາລະນະສຸກ, MOIC: ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, MOLSW: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

| | | |
|---|---|---|
| | 2) ເຈົ້າຂອງໂຄງການເຂົ້າໃຈຂັ້ນຕອນການສະເໜີຂໍງົບປະມານປະຈໍາປີ ແລະ ວິທີການນໍາໃຊ້ທຸກໆວິທີການຄຸ້ມຄອງການລົງທຶນລັດ | DEM, DOE, DOH, DOIC, DLSW)[2] |

ສ່ວນການລົງຕິດຕາມໜ້າວຽກກໍ່ຄືໂປຣແກມທີ 4 ແມ່ນມີແຜນຈະຈັດຕັ້ງປະຕິບັດໃນເດືອນກຸມພາ ແລະເດືອນມີນາ 2011.ວັດຖຸປະສົງໃນການລົງຕິດຕາມໜ້າວຽກດັ່ງກ່າວແມ່ນເພື່ອໄປສະໜັບສະໜູນຊຸກຍູ້ ພຜທແຂວງແລະກົມ/ພະແນກແຜນການຂອງບັນດາກະຊວງໃນການສ້າງແຜນສະເໜີຂໍງົບປະມານການລົງທຶນລັດສໍາລັບສົກປີ 2011-12ນີ້ຢ່າງເໝາະສົມ.

## *2.2 ຜົນຂອງການຈັດຝຶກອົບຮົມ*

### (1) ການສໍາມະນາກ່ຽວກັບການຄຸ້ມຄອງງົບປະມານ ແລະ ທາງດ້ານການເງິນການລົງທຶນລັດ

ການສໍາມະນາກ່ຽວກັບການຄຸ້ມຄອງງົບປະມານ ແລະ ທາງດ້ານການເງິນການລົງທຶນລັດ (ຕໍ່ໄປນີ້ຈະເອີ້ນຫຍໍ້ວ່າ " ການສໍາມະນາ ") ໄດ້ຖືກຈັດຂຶ້ນໃນວັນທີ 1-4 ເດືອນພະຈິກ 2010 ຫົວໜ້າ ແລະ ຮອງຫົວໜ້າພະແນກໄດ້ຖືກເຊີນ ເພື່ອໃຫ້ບັນລຸວັດຖຸປະສົງຂອງການພັດທະນາທິດທາງລວມຂອງການສ້າງແຜນສະເໜີຂໍງົບປະມານປະຈໍາສົກປີ 2011–12 ທີ່ຈະມາເຖິງແລະເພື່ອສ້າງຄວາມເຂົ້າໃຈໃນມາດຕະຖານຂອງຂັ້ນຕອນການສະເໜີຂໍງົບປະມານແລະການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ.

ການສໍາມະນາໄດ້ຖືກອອກແບບຂຶ້ນສໍາລັບລະດັບນັກຄຸ້ມຄອງໃນ ພຜທ ຂອງບັນດາແຂວງ ດ້ວຍ ເຫດນີ້ຈຶ່ງໄດ້ເຊີນບັນດາຫົວໜ້າ ແລະ ຮອງຫົວໜ້າ ພຜທ ຂອງແຕ່ລະແຂວງມາເຂົາຮ່ວມສໍາມະນາ. ແຕ່ລະດັບການເຂົ້າຮ່ວມໂຕຈິງຂອງບັນດາໜ້າ ແລະ ຮອງຫົວໜ້າ ພຜທ ແຂວງແມ່ນບໍ່ສູງເທົ່າທີ່ຄວນ ເຖິງແມ່ນວ່າຜູ້ເຂົ້າຮ່ວມຈະມີຄວາມເຂົ້າໃຈຫຼາຍຕໍ່ກັບບັນດາອົງປະກອບຕ່າງໆແລະມີຄວາມກະຕືລືລົ້ນໃນການເຮັດບົດຝຶກຫັດ, ແຕ່ສິ່ງທີ່ສໍາຄັນແມ່ນ ລະດັບຫົວໜ້າ ແລະ ຮອງຫົວໜ້າຂະແໜງທີ່ເປັນໂຕແທນໃຫ້ແກ່ຫົວ ໜ້າ/ຮອງຫົວໜ້າພະແນກ ໃນການເຂົ້າຮ່ວມສໍາມະນາໃນຄັ້ງນີ້ໄດ້ນໍາເອົາເນື້ອໃນ ແລະ ໝາກຜົນຂອງການສໍາມະນາຄັ້ງນີ້ໄປລາຍງານຕໍ່ຂັ້ນເທິງໃຫ້ຮັບຮູ້ພາຍຫຼັງທີ່ກັບຄືນໄປແຂວງຂອງຕົນ.

ການຈັດສໍາມະນາໃນຄັ້ງນີ້, ສ່ວນໃຫ່ຍແມ່ນບັນຍາຍ ແລະ ນໍາພາໂດຍຫົວໜ້າກົມປະເມີນຜົນ, ກະຊວງ ຜທ (MPI-DOE) ຮອງຫົວໜ້າກົມປະເມີນຜົນ, ກະຊວງ ຜທ ແລະຊ່ຽວຊານຍີ່ປຸ່ນຈາກ

[2] DAF: ພະແນກກະສິກໍາປ່າໄມ້, DPWT: ພະແນກໂຍທາທິການ ແລະ ຂົນສົ່ງ, DIC: ພະແນກອຸດສາຫະກໍາການຄ້າ, DEM: ພະແນກພະລັງງານ ແລະ ບໍ່ແຮ່, DOE: ພະແນກສຶກສາທິການ, DOH: ພະແນກສາທາລະນະສຸກ, DOIC: ພະແນກຖະແຫລງຂ່າວ ແລະ ວັດທະນະທໍາ, DLSW: , ພະແນກແຮງງານ ແລະ ສະຫວັດດີການ

ໂຄງການ ພີແຄັບ. ພະນັກງານຈາກກົມແຜນການ ແລະກົມປະເມີນຜົນ, ກະຊວງ ຜທ ເຮັດໜ້າທີ່ເປັນຄູຝຶກຊ່ວຍອະທິບາຍໃຫ້ຜູ້ເຂົ້າຮ່ວມໃນລະຫວ່າງເຮັດບົດຝຶກຫັດ. ຜ່ານການສັງເກດການພວກເຮົາເຫັນແຈ້ງວ່າບັນດາຄູຝຶກຊ່ວຍເລົ່ານີ້ສາມາດໃຫ້ຄຳອະທິບາຍ ຫຼືໃຫ້ການ ສະໜັບສະໜູນທີ່ເໝາະສົມ, ດັ່ງນັ້ນຈຶ່ງສາມາດເວົ້າໄດ້ວ່າພວກເຂົາເຈົ້າມີຄວາມຮູ້ພຽງພໍໃນຫົວຂໍ້ດັ່ງກ່າວພ້ອມກັບມີຄວາມເຂົ້າໃຈ ແລະ ມີຄວາມໝັ້ນໃຈບົດບາດຂອງເຂົາເຈົ້າໃນການໃຫ້ຄຳແນະນຳກ່ຽວກັບການຄຸ້ມຄອງການລົງທຶນລັດຕໍ່ບັນດາພະນັກງານຈາກ ພຜທ ແຂວງ.

ອີງຕາມການຕົກລົງເຫັນດີລະຫວ່າງລັດຖະບານລາວ ແລະ ລັດຖະບານຍີ່ປຸ່ນກ່ອນທີ່ຈະດຳເນີນໂຄງການ, 2 ສ່ວນ 3 ຂອງລາຍຈ່າຍທີ່ໃຊ້ເຂົ້າໃນການຈັດສຳມະນາ ແລະ ຝຶກອົບຮົມໃນປີທີ 4 ນີ້ແມ່ນມອບໃຫ້ເປັນພັນທະຂອງກະຊວງ ຜທ. ດັ່ງນັ້ນ, ໂຄງການ ແລະ ກະຊວງ ຜທ ໄດ້ແບ່ງຄວາມຮັບຜິດຊອບກ່ຽວກັບລາຍຈ່າຍຄື: ສະຖານທີ່ຈັດສຳມະນາ ແລະ ຝຶກອົບຮົມ, ຄ່າເດີນທາງ, ຄ່າທີ່ພັກເຊົາ ແລະ ເບ້ຍລ້ຽງຂອງຜູ້ເຂົ້າຮ່ວມແມ່ນ ກະຊວງ ຜທ ເປັນຜູ້ຈັດຫາ, ສ່ວນຄ່າຈັດພິມບັນດາເອກະສານ ແລະ ບັນດາອຸປະກອນຕ່າງໆທີ່ໃຊ້ໃນລະຫວ່າງການຈັດສຳມະນາ/ຝຶກອົບຮົມແມ່ນທາງຝ່າຍໂຄງການເປັນຜູ້ຈັດຫາ. ເຖິງແມ່ນວ່າຈະມີຄວາມສັບສົນບາງອັນໃນການຈັດຫາເບື້ອງຕົ້ນ, ແຕ່ສຸດທ້າຍກໍ່ກ້າວໄປໃນທາງບວກຢ່າງມີປະສິດທິພາບເຊັ່ນ: ໄດ້ນຳໃຊ້ສູນຝຶກອົບຮົມຂອງກະຊວງ ຜທ ຢ່າງເຕັມສ່ວນ ສິ່ງດັ່ງກ່າວນີ້ເປັນຂີດໝາຍໃນທາງບວກສຳລັບກະຊວງ ຜທ ໃນການຈັດຝຶກອົບຮົມດ້ວຍຕົນເອງໃນອະນາຄົດ.

**[ຜູ້ເຂົ້າຮ່ວມ ແລະ ຕາຕະລາງ]**

ສຳມະນາໄດ້ຈັດຂຶ້ນ 2 ຊຸດ ເຊິ່ງແຕ່ລະຊຸດໃຊ້ເວລາ 2 ມື້ ຜູ້ເຂົ້າຮ່ວມສຳມະນາໄດ້ຖືກແບ່ງຕາມແຂວງດັ່ງຕາຕະລາງລຸ່ມນີ້:

| ຊຸດ | ວັນທີ | ຜູ້ເຂົ້າຮ່ວມສຳມະນາ |
|---|---|---|
| ຊຸດທີ 1 | 1-2/11/2010 | ຜູ້ເຂົ້າຮ່ວມທັງໝົດ 32 ທ່ານຈາກ 9 ຄື: ນະຄອນຫຼວງ, ແຂວງວຽງຈັນ, ຄຳມ່ວນ, ບໍລິຄຳໄຊ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ ແລະ ອັດຕະປື. |
| ຊຸດທີ 2 | 3-4/11/2010 | ຜູ້ເຂົ້າຮ່ວມທັງໝົດ 31 ທ່ານຈາກ 8 ແຂວງ ຄື: ແຂວງ ຜົ້ງສາລີ, ບໍ່ແກ້ວ,ໄຊຍະບູລີ, ຫົວພັນ, ອຸດົມໄຊ, ຫຼວງນ້ຳທາ, ຊຽງຂວາງ ແລະຫຼວງພະບາງ |

ຜູ້ເຂົ້າຮ່ວມສຳມະນາ ແລະ ຕຳແໜ່ງຂອງເຂົາເຈົ້າໄດ້ສະແດງຢູ່ໃນຕາຕະລາງທາງລຸ່ມນີ້:

| ຕຳແໜ່ງ | ຈຳນວນຜູ້ເຂົ້າຮ່ວມ | ເປີເຊັນ |
|---|---|---|
| ຫົວໜ້າພະແນກ | 1 | 1.5% |
| ຮອງຫົວໜ່າພະແນກ | 11 | 16.17% |
| ຫົວໜ້າຂະແໜງ | 22 | 33.3% |
| ຮອງຫົວໜ້າຂະແໜງ | 7 | 10.6% |
| ວິຊາການ | 25 | 37.9% |
| ລວມ | 66 | |

ບັນດາຄະນະພະແນກ ພຜທ ລວມມີຫົວໜ້າ, ຮອງຫົວໜ້າພະແນກ ແລະຫົວໜ້າຂະແໜງໄດ້ຖືກເຊີນເຂົ້າຮ່ວມສຳມະນາແຕ່ມີຫົວໜ້າພະແນກ ພຜທ ພຽງ 1 ທ່ານ ໃນ 17 ແຂວງສາມາດເຂົ້າຮ່ວມສຳມະນາໃນຄັ້ງນີ້. ເນື່ອງຈາກວ່າໜັງສືເຊີນເຂົ້າຮ່ວມສຳມະນາໄດ້ຖືກສົ່ງກ່ອນການຈັດສຳມະນາພຽງແຕ່ 1 ອາທິດເທົ່ານັ້ນ ເຊິ່ງເປັນການຍາກໃນການຈັດສັນເວລາສຳລັບບັນດາຫົວໜ້າພະແນກ ເພາະພວກເຂົາເຈົ້າໄດ້ຈັດເວລາໃສ່ໃນວຽກອື່ນແລ້ວ. ດັ່ງນັ້ນຈຶ່ງຂຶ້ນກັບບັນດາຮອງຫົວໜ້າພະແນກ ແລະ ຫົວໜ້າຂະແໜງໃນ ພຜທຂອງແຕ່ລະແຂວງທີ່ຖືກມອບໝາຍໃຫ້ມາແທນເປັນຜູ້ລາຍງານເນື້ອໃນຂອງການສຳມະນາຄັ້ງນີ້ໃຫ້ຫົວໜ້າພະແນກຟັງ.

**[ ໂປຣແກມ ແລະ ຜູ້ບັນຍາຍ ]**

ທ່ານຫົວໜ້າກົມ ແລະ ຮອງຫົວໜ້າກົມປະເມີນຜົນ, ກະຊວງ ຜທ (MPI- DOE) ແລະຊ່ຽວຊານຍີ່ປຸ່ນຈາກໂຄງການພີແຄັບ 2 ເປັນຜູ້ບັນຍາຍໃນສຳມະນາຄັ້ງນີ້. ຕາຕະລາງລຸ່ມນີ້ສະແດງເຖິງໂປຣແກມຂອງສຳມະນາ:

| **ມື້** | **ພາກ** | **ເນື້ອໃນ** |
|---|---|---|
| | | [ ພິທີເປີດ]<br>(ຊຸດທີ 1: ທ່ານ ບຸນປອນ ສີສຸລາດ ຫົວໜ້າກົມປະເມີນຜົນ ,ກະຊວງ ຜທ ເປັນປະທານເປີດ)<br>(ຊຸດທີ 2: ທ່ານ ບຸນທະວີ ສີສຸພານທອງ ລັດຖະມົນຕີຊ່ວຍ ກະຊວງ ຜທ ເປັນປະທານເປີດ) |
| | ເຊົ້າ | [ ອະທິບາຍກ່ຽວກັບວາລະແລະຕາຕະລາງ]<br>(ໂດຍທ່ານ ນາງ ໂຕໂມເອະໄຫລ້າ ຊ່ຽວຊານດ້ານການພັດທະນາການຝຶກອົບຮົມ ໂຄງການພີແຄັບ 2) |

| | | |
|---|---|---|
| ມື້ທີ 1 | | [ ບັນຍາຍ: ກ່ຽວກັບກົດໝາຍວ່າດ້ວຍການລົງທຶນລັດ] ໂດຍທ່ານ ບຸນປອນສີສຸລາດ (*1) |
| | | [ ບັນຍາຍ: ທິດທາງຂອງງົບປະມານການລົງທຶນລັດແລະຂັ້ນຕອນສະເໜີຂໍ ງົບປະມານປະຈຳປີ] (ໂດຍທ່ານ ອີຊີໂຣະ ໂອກຸມຸຣະ ຫົວໜ້າທີ່ປຶກສາໂຄງການພີແຄັບ 2) |
| | ແລງ | [ ສຶກສາ: ວິທີການວິເຄາະທາງດ້ານການເງິນ] (ໂດຍທ່ານ ຮິໂຣຟູມິ ອາເຊຕະ) |
| ມື້ທີ 2 | ເຊົ້າ | [ ສຶກສາ: ວິທີການສ້າງ ມຸມມອງທາງດ້ານການເງິນ ໄລຍະກາງ] (ໂດຍທ່ານ ຮິໂຣຟູມິ ອາເຊຕະ) |
| | ແລງ | [ ສຶກສາ: ສ້າງທິດທາງການລົງທຶນລັດແລະມຸມມອງທາງດ້ານງົບປະມານ] (ໂດຍທ່ານ ອິຊິໂຣະ ໂອກຸມຸຣະ) |
| | | [ ການກະກຽມການຂຶ້ນນຳສະເໜີເປັນກຸ່ມ(*2) ຂຽນບົດລາຍງານ, ການປະເມີນຜົນ] |
| | | [ ພິທີປິດ]<br>(ຊຸດທີ 1: ໂດຍທ່ານບຸນປອນສີສຸລາດ)<br>(ຊຸດທີ 2: ໂດຍທ່ານພູຊົງ ບັນນາວົງ ຮອງຫົວໜ້າກົມປະເມີນຜົນ, ກະຊວງແຜນ |

* 1: ການບັນຍາຍກ່ຽວກັບການລົງທຶນລັດໃນຊຸດທີ 1 ແມ່ນໄດ້ຈັດຂຶ້ນໃນພາກແລງຂອງມື້ທີ 1 ເນື່ອງຈາກຕິດພາລະກິດໃນພາກເຊົ້າ

* 2: ໃນຊຸດທີ 2 ທ່ານ ດຣ ບຸນທະວີ ແລະ ທ່ານ ບຸນປອນ ສີສຸລາດ ມີແຜນເຂົ້າຮ່ວມໃນໄລຍະການຂຶ້ນສະເໜີເປັນກຸ່ມ ແຕ່ເນື່ອງຈາກທັງສອງບໍ່ສາມາດຈັດສັນເວລາໄດ້ ດັ່ງນັ້ນ ຈຶ່ງບໍ່ສາມາດເຂົ້າຮ່ວມ ແນວໃດກໍ່ຕາມ ທ່ານ ດຣ ບຸນທະວີ ໄດ້ແນະນຳໃຫ້ບັນດາຜູ້ເຂົ້າຮ່ວມຂອງແຕ່ລະແຂວງຂຽນບົດລາຍງານສົ່ງ.

## [ ວັດຖຸປະສົງ ແລະ ເນື້ອໃນຂອງໂປຣແກມ]

ວັດຖຸປະສົງຂອງສຳມະນາແມ່ນ ເພື່ອພັດທະນາທິດທາງລວມຂອງການສ້າງແຜນງົບປະມານປະຈຳປີສຳລັບສົກປີ 2011-12 ພ້ອມກັບຮັບຮູ້ເຖິງຂັ້ນຕອນມາດຕະຖານ ໃນການສະເໜີຂໍງົບປະມານ ແລະຄວາມສຳຄັນຂອງການຄຸ້ມຄອງທາງດ້ານການເງິນຂອງ ໂຄງການລົງທຶນລັດ ການສຳມະນາປະກອບດ້ວຍ 3 ຫົວຂໍ້ ດັ່ງນີ້:

### ກົດໝາຍວ່າດ້ວຍການລົງທຶນລັດ:

[ ຈຸດປະສົງ ]

- ✦ ເພື່ອໃຫ້ເຂົ້າໃຈຈຸດປະສົງ ແລະ ຄວາມສຳຄັນຂອງກົດໝາຍ
- ✦ ເພື່ອໃຫ້ເຂົ້າໃຈເນື້ອໃນລະອຽດຂອງມາດຕາທີ່ສຳຄັນ ແລະ ຮັບປະກັນວ່າທຸກໆອົງການຈັດຕັ້ງ ແລະ

| |
|---|
| ພະນັກງານທີ່ກ່ຽວຂ້ອງກັບການຄຸ້ມຄອງການລົງທຶນລັດຈະປະຕິບັດຕາມເນື້ອໃນທີ່ລະບຸໄວ້ນກົດໝາຍ. |

## ການພັດທະນາທິດທາງ ແລະ ການດຳເນີນການຂໍສະເໜີງົບປະມານປະຈຳປີ:

[ ຈຸດປະສົງ]

✦ ເພື່ອໃຫ້ບັນດາການນຳໃນ ພຜທ ເຂົ້າໃຈເຖິງຄວາມສຳຄັນຂອງການດຳເນີນການສະເໜີງົບປະ ມານການລົງທຶນລັດປະຈຳປີແລະສາມາດເປັນຜູ້ນຳພາໃນການດຳເນີນການຄຸ້ມຄອງ ການລົງທຶນລັດ.

✦ ເພື່ອໃຫ້ບັນດາການນຳໃນ ພຜທ ສາມາດຮ່າງທິດທາງງົບປະມານການລົງທຶນລັດຂອງແຂວງຕົນເພື່ອແຈ້ງໄປຍັງບັນດາຂະແໜງການກ່ອນຂັ້ນຕອນສະເໜີງົບປະມານປະຈຳປີ.

[ ໝາກຜົນທີ່ຄາດວ່າຈະໄດ້ຮັບ]

✦ ຮ່າງຜົນການວິເຄາະທິດທາງການສ້າງແຜນງົບປະມານປະຈຳປີ

✦ ຮ່າງໂຄງຮ່າງຂອງງົບປະມານປະຈຳປີພ້ອມກັບໂຕເລກງົບປະມານເປົ້າໝາຍ

## ການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ

[ ຈຸດປະສົງ]

✦ ເພື່ອໃຫ້ບັນດາການນຳ ພຜທ ເຂົ້າໃຈເຖິງຄວາມສຳຄັນຂອງການວິເຄາະທາງດ້ານການເງິນໂຄງການ.

✦ ເພື່ອໃຫ້ບັນດາການນຳ ພຜທ ສາມາດຮ່າງການວິເຄາະທາງດ້ານການເງິນແລະເຂົ້າໃຈເຖິງມຸມມອງທາງດ້ານການເງິນໄລຍະກາງຂອງແຂວງເຂົາເຈົ້າ.

[ ໝາກຜົນທີ່ຄາດວ່າຈະໄດ້ຮັບ ]

✦ ສະພາບການເງິນແຂວງໃນປະຈຸບັນ(ວົງເງິນເຖິງກຳນົດແລະໄລຍະເວລາການສຳລະ ອີງຕາມງົບປະມານປະຈຳປີ 2010/11

✦ ເປົ້າໝາຍວົງເງິນເຖິງກຳນົດສຳລັບສົກງົບປະມານປີ 2011/12

✦ ມຸມມອງທາງດ້ານການເງິນຂອງໂຄງການລົງທຶນລັດໄລຍະກາງສຳລັບ 5 ປີຂ້າງໜ້າ.

✦ ຍຸດທະສາດທາງດ້ານການເງິນໄລຍະກາງ,ໂຕເລກ 8 ເປົ້າໝາຍແລະບັນດາກິດຈະກຳເພື່ອໃຫ້ບັນລຸເປົ້າໝາຍ.

**[ ການປະເມີນຜົນຂອງສຳມະນາ]**

ການຈັດສຳມະນາໃນຄັ້ງນີ້ຖືກປະເມີນໂດຍຜູ້ເຂົ້າຮ່ວມ ເຊິ່ງໄດ້ມີການແຈກຢາຍແບບສອບຖາມໃນຕອນທ້າຍຂອງໂປຣແກມສຳມະນາ. ໃນແບບສອບຖາມດັ່ງກ່າວປະກອບມີ 3 ລາຍການຄື: a) ຊ່ວງເວລາ ແລະ ໄລຍະເວລາໃນການຈັດສຳມະນາ, b) ຄຸນນະພາບຂອງສຳມະນາ ແລະ c) ຄວາມສອດຄ່ອງຂອງສຳມະນາ (ມັນມີປະສິດທິຜົນຕໍ່ວຽກຂອງທ່ານບໍ່) ເຊິ່ງແຕ່ລະລາຍການປະກອບມີ 3 ຄຳຖາມ ແຕ່ລະຄຳຖາມມີ 5 ລະດັບໃຫ້ຜູ້ເຂົ້າຮ່ວມຕີລາຄາຕັ້ງແຕ່ 6 ລະດັບ 5 ແມ່ນ "ດີຫຼາຍ" ຈົນເຖິງລະດັບ 1 ແມ່ນ "ອ່ອນຫຼາຍ"

ລະດັບຄະແນນສະເລ່ຍຂອງ 9 ຄຳຖາມຈາກ 59 ຄົນທີ່ຕອບແບບສອບຖາມໄດ້ສະແດງໃນຕາຕະລາງລຸ່ມນີ້:

| ຄຳຖາມ | | ຄະແນນສະເລ່ຍ |
|---|---|---|
| **a) ຊ່ວງເວລາ ແລະໄລຍະເວລາຂອງການຈັດສຳມະນາ** | | |
| a)1 | ຊ່ວງເວລາຂອງການຈັດສຳມະນາ | 4.1 |
| a)2 | ໄລຍະເວລາຂອງຈັດສຳມະນາ | 3.8 |
| a)3 | ການຈັດເວລາຂອງແຕ່ລະຫົວຂໍ້ | 4.0 |
| **b). ຄຸນນະພາບຂອງການຈັດສຳມະນາ** | | |
| b)1 | ຂັ້ນຕອນການສະເໜີຂໍງົບປະມານປະຈຳປີ | 4.5 |
| b)2 | ການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ | 4.5 |
| b)3 | ຂັ້ນຕອນການສ້າງແຜນງົບປະມານປະຈຳປີ | 4.4 |
| **c). ສິ່ງທີ່ກ່ຽວພັນເຖິງການສຳມະນາ (ມັນມີຜົນປະໂຫຍດຕໍ່ໜ້າວຽກໂຕຈິງຂອງທ່ານບໍ?)** | | |
| c)1 | ຂັ້ນຕອນການສະເໜີຂໍງົບປະມານປະຈຳປີ | 4.6 |
| c)2 | ການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ | 4.6 |
| c)3 | ຂັ້ນຕອນການສ້າງແຜນງົບປະມານປະຈຳປີ | 4.6 |

ດັ່ງທີ່ສະແດງຜົນຂອງການປະເມີນຂ້າງເທິງນີ້, ໂດຍລວມແລ້ວການຈັດສໍາມະນາຄັ້ງນີ້ ໄດ້ຮັບການຍອມຮັບສູງ. ທຸກໆຄໍາຖາມໄດ້ຮັບຄະແນນສະເລ່ຍຫຼາຍກ່ວາ 4 ຍົກເວັ້ນຄໍາຖາມທີ a)2 ທີ່ຖາມວ່າໄລຍະເວລາການຈັດສໍາມະນາແມ່ນເໝາະສົມບໍ່? ເຊິ່ງໄດ້ຮັບຄະແນນສະເລ່ຍ 3.8. ສາຍເຫດກໍ່ເນື່ອງຈາກວ່າ ຜູ້ເຂົ້າຮ່ວມບາງທ່ານຕ້ອງການໃຫ້ມີໄລຍະເວລາ ການຈັດສໍາມະນາຫຼາຍກ່ວາເດີມໃນແຕ່ລະອົງປະກອບ. ເມື່ອເບິ່ງລວມແລ້ວຄະແນນສະເລ່ຍຂອງລາຍການ a) ແມ່ນ ຈະຕໍ່າກ່ວາລາຍການ b) ແລະ c) ສາຍເຫດກໍ່ເນື່ອງຈາກເຫດຜົນ ອັນດຽວກັນກັບທີ່ກ່າວມາຂ້າງເທິງ. ເວົ້າລວມ, ໂຄງຮ່າງ ແລະ ເນື້ອໃນຂອງການສໍາມະນາແມ່ນ ຖືກປະເມີນໃນລະດັບສູງ ແລະ ຜູ້ເຂົ້າຮ່ວມໄດ້ເລັງເຫັນຄວາມສອດຄ່ອງຂອງ ເນື້ອໃນຕໍ່ກັບວຽກງານຂອງເຂົາເຈົ້າ. ມີບາງຄໍາເຫັນກ່ຽວກັບ ການນໍາໃຊ້ສູນຝຶກອົບຮົມຂອງກະຊວງ ຜທ ແລະ ບ່ອນພັກເຊົາ ຖ້າທຽບໃສ່ປີຜ່ານມາ ຜູ້ເຂົ້າຮ່ວມໄດ້ຮັບເງິນຄ່າທີ່ພັກເຊົາ ແລະ ພວກເຂົາເຈົ້າສາມາດເລືອກພັກຢູ່ບ່ອນໃດກໍ່ໄດ້ ແຕ່ສໍາລັບປີນີ້ຜູ້ ເຂົ້າຮ່ວມບໍ່ມີທາງເລືອກຈໍາກັດ ແລະ ເຂົາເຈົ້າຕ້ອງໄດ້ພັກຢູ່ທີ່ສູນຝຶກຂອງກະຊວງ ຜທ ການຈັດສັນແບບນີ້ແມ່ນມີປະສິດທິພາບ ສໍາລັບການຈັດຝຶກອົບຮົມພາຍໃຕ້ງົບປະມານທີ່ມີຢ່າງຈໍາກັດລະຫວ່າງກະຊວງ ຜທ ແລະ ພຜທ ແຕ່ມັນອາດຈະເຮັດໃຫ້ຜູ້ເຂົ້າຮ່ວມບາງທ່ານບໍ່ພໍໃຈໄດ້.

### (2) ການຈັດຝຶກສໍາລັບພະນັກງານຈາກ ພຜທ ແຂວງ ແລະ ກົມ/ພະແນກແຜນການຂອງບັນດາກະຊວງ (ຝຶກອົບຮົມເພື່ອສ້າງຄູຝຶກ)

ການຈັດຝຶກສໍາລັບພະນັກງານຈາກ ພຜທ ແຂວງ ແລະ ກົມ/ພະແນກແຜນການຂອງບັນດາກະຊວງ (ຝຶກອົບຮົມເພື່ອສ້າງຄູຝຶກ) ແລະ ຕໍ່ໄປນີ້ເອີ້ນວ່າ "ການຝຶກອົບຮົມ ເພື່ອສ້າງຄູຝຶກ (TOT) " ໄດ້ຖືກຈັດຂຶ້ນໃນວັນທີ 8 ເດືອນພະຈິກ ເຖິງວັນທີ 3 ເດືອນທັນວາປີ 2010. ການຝຶກອົບຮົມດັ່ງກ່າວໄດ້ຖືກຈັດຂຶ້ນເປັນ 4 ຊຸດ ແລະ 3 ຊຸດທໍາອິດແມ່ນມີເປົ້າໝາຍສໍາລັບບັນດາແຂວງ ແລະນະຄອນຫຼວງ ເຊິ່ງໃຊ້ເວລາໃນການຝຶກອົບຮົມ 5 ມື້ຕໍ່ຊຸດ ແລະ ຊຸດສຸດທ້າຍ (ຊຸດທີ 4) ແມ່ນ ມີເປົ້າໝາຍສໍາລັບບັນດາກະຊວງເຊິ່ງໃຊ້ເວລາໃນການຝຶກອົບຮົມ 4 ມື້.

ໂດຍລວມແລ້ວ ການຝຶກອົບຮົມ ເພື່ອສ້າງຄູຝຶກ ແມ່ນປະສົບຜົນສໍາເລັດໂດຍອີງຕາມຜົນການປະເມີນ ຂອງຜູ້ເຂົ້າຮ່ວຝຶກອົບຮົມທີ່ໃຫ້ລະດັບສູງ ແລະຄວາມພໍໃຈໃນພະນັກງານກະຊວງ ຜທ ທີ່ ຮັບບົດບາດເປັນຄູຝຶກໃນການຝຶກອົບຮົມຄັ້ງນີ້.

ການຝຶກອົບຮົມ ເພື່ອສ້າງຄູຝຶກໃນຄັ້ງນີ້ ເປັນການຍົກສູງແຮງຈູງໃຈໃຫ້ພະນັກງານຂອງ ພຜທ ແຂວງ ແລະ ນະຄອນຫຼວງ. ການຝຶກອົບຮົມເພື່ອສ້າງຄູຝຶກໄດ້ສິ້ນສຸດລົງຢ່າງປະສົບຜົນສໍາເລັດໃນການບັນລຸ 3 ໝາກຜົນເຊິ່ງລວມມີການກໍານົດຕາຕະລາງການສ້າງແຜນງົບປະມານປະຈໍາປີການພັດທະນາທິດທາງການນໍາໃຊ້ງົບປະມານການລົງທຶນລັດ ແລະໂຕເລກເປົ້າໝາຍໃນການ

ຈັດສັນງົບປະມານການລົງທຶນລັດ ທີ່ສາມາດນຳໃຊ້ເຂົ້າໃນການກະກຽມ ງົບປະມານການລົງທຶນລັດສຳລັບສົກປີ 2011-12.

**[ ຜູ້ເຂົ້າຮ່ວມ ແລະ ຕາຕະລາງ]**

ການຝຶກອົບຮົມ ເພື່ອສ້າງຄູຝຶກ ແມ່ນໄດ້ຖືກຈັດຂຶ້ນຈາກວັນທີ 8 ພະຈິກ ເຖິງ ວັນທີ 3 ທັນວາ 2010 ເຊິ່ງ ຈັດຂຶ້ນຕໍ່ຈາກສຳມະນາ ການຄຸ້ມຄອງທາງດ້ານການເງິນທີ່ຖືກຈັດຂຶ້ນໃນຕົ້ນເດືອນພະຈິກ 2010 . ການຝຶກອົບຮົມ ເພື່ອສ້າງຄູຝຶກ ໄດ້ແບ່ງອອກເປັນ 4 ຊຸດໃນ ຊຸດທີ 1-3 ແມ່ນມີພະນັກງານ ພຜທ ຈາກ 5 ຫາ 6 ແຂວງເຂົ້າຮ່ວມ ຕໍ່ຊຸດຝຶກອົບຮົມ ແລະສ່ວນຊຸດທີ 4 ແມ່ນເຊີນຜູ້ເຂົ້າຮ່ວມຈາກ 8 ກະຊວງຫຼັກ (ເບິ່ງ ເອກະສານຄັດຕິດ 1 ແລະ 2 ສຳລັບລາຍລະອຽດຂອງການຝຶກອົບຮົມ ເພື່ອສ້າງຄູຝຶກ ແລະວາລະການຝຶກອົບຮົມ). ພະນັກງານຈາກ ພຜທ ທັງໝົດ 103 ທ່ານ ແລະ ພະນັກງານຈາກກົມ/ພະແນກແຜນການຂອງ 8 ກະຊວງຫຼັກ ທັງໝົດ 35 ທ່ານ ໄດ້ສຳເລັດການຝຶກອົບຮົມ ເພື່ອສ້າງຄູຝຶກ.

ນອກຈາກນີ້ຍັງມີອາສາສະໝັກຈາກອົງການຍີ່ປຸ່ນຮ່ວມມືສາກົນຕ່າງປະເທດ (JOCV) ຄືທ່ານ ນິຊິມຸຣະ ປະຈຳຢູ່ ພຜທ ແຂວງສາລະວັນ ແລະທ່ານ ອິຊຶກະ ປະຈຳຢູ່ ພຜທ ແຂວງຄຳມ່ວນ ກໍ່ໄດ້ເຂົ້າຮ່ວມການຝຶກອົບຮົມໃນຄັ້ງນີ້ ແລະພວກເຂົາເຈົ້າກໍ່ໄດ້ປະກອບຄຳຄິດເຫັນທີ່ເປັນປະໂຫຍດໃນການຄຸ້ມຄອງແລະເນື້ອໃນຂອງການຝຶກອົບຮົມ.

| ຊຸດ | ວັນທີ(ໄລຍະເວລາ) | ແຂວງ/ກະຊວງເປົ້າໝາຍ | ຈຳນວນຜູ້ເຂົ້າຮ່ວມ |
|---|---|---|---|
| 1 | 8-12/11/2010<br>(5 ວັນ) | ນະຄອນຫຼວງ, ແຂວງຄຳມ່ວນ, ສະຫວັນເຂດ, ບໍລິຄຳໄຊ ແລະວຽງຈັນ | 31 ທ່ານ |
| 2 | 15-19/11/2010<br>(5 ວັນ) | ແຂວງສາລະວັນ, ອັດຕະປື, ໄຊຍະບູລີ, ຫຼວງພະບາງ, ຊຽງຂວາງ ແລະຫົວພັນ | 39 ທ່ານ |
| 3 | 22-26/11/2010<br>(5 ວັນ) | ແຂວງເຊກອງ, ຈຳປາສັກ, ຜົ້ງສາລີ, ອຸດົມໄຊ, ຫຼວງນ້ຳທາ, ບໍ່ແກ້ວ | 33 ທ່ານ |
| | 22/11-3/12/2010[3] | ກະຊວງກະສິກຳປ່າໄມ້, ໂຍທາ ແລະ ຂົນສົ່ງ, ອຸດສະຫະກຳການຄ້າ, ພະລັງງານ ແລະ ບໍ່ແຮ່, ສຶກສາ, ສາທາລະນະສຸກ (ຖືກເຊີນແຕ່ບໍ່ໄດ້ | |

[3] ຍົກເວັ້ນວັນທີ 2 ທັນວາ

| | | | |
|---|---|---|---|
| 4 | (4 ວັນ) | ເຂົ້າຮ່ວມ), ຖະແຫຼງຂ່າວ ແລະ ວັດທະນະທຳ, ແຮງງານ ແລະ ສະຫວັດດີການສັງຄົມ | 35 ທ່ານ |
| | ລວມ | | 138 ທ່ານ |

**[ທີມຄູຝຶກ ແລະ ຜູ້ຊ່ວຍ]**

ຮອງຫົວໜ້າກົມປະເມີນຜົນ ແລະພະນັກງານຂອງກະຊວງ ຜທ ເປັນຄູຝຶກໃນການຝຶກອົບຮົມ TOT ນີ້. ຜູ້ປະສານງານໂຄງການຈາກກົມປະເມີນຜົນ ກະຊວງ ຜທ ແລະພະນັກງານຈາກກົມຈັດຕັ້ງແລະພະນັກງານ (MPI-DOOP) ແມ່ນຮັບຜິດຊອບກ່ຽວກັບການຄຸ້ມຄອງຝຶກອົບຮົມໂດຍລວມ. ພະນັກງານຈາກກົມຈັດຕັ້ງແລະພະນັກງານ ກະຊວງ ຜທ ພ້ອມກັບບັນດາຊ່ຽວຊານ ຍີ່ປຸ່ນ ແລະ ທີ່ປຶກສາພາຍໃນຮັບຜິດຊອບ ກ່ຽວກັບການຄວບຄຸມຄຸນນະພາບ ແລະ ການປະເມີນຜົນ.

| ໜ້າທີ່ຮັບຜິດຊອບ | ກົມ | ຈຳນວນພະນັກງານ |
|---|---|---|
| ເປີດ/ປິດ ພິທີ | ກົມປະເມີນຜົນ (DOE) | 2 ທ່ານ |
| ຄູຝຶກ | ກົມປະເມີນຜົນ (DOE) | 16 ທ່ານ |
| | ກົມແຜນການ (DOP) | 3 ທ່ານ |
| | ກົມຮ່ວມມືສາກົນ (DIC) | 2 ທ່ານ |
| ປະສານງານ/ປະເມີນຜົນການຝຶກອົບຮົມ | ກົມປະເມີນຜົນ (DOE) | 1 ທ່ານ |
| | ກົມຈັດຕັ້ງ ແລະ ພະນັກງານ (DOOP) | 2 ທ່ານ |
| ລວມ | | 26 ທ່ານ |

**[ຈຸດປະສົງ ແລະ ຫົວຂໍ້]**

ຈຸດປະສົງພື້ນຖານຂອງການຝຶກອົບຮົມ ເພື່ອສ້າງຄູຝຶກແມ່ນ ເພື່ອໃຫ້ພະນັກງານ ພຜທ ແລະ ກົມ/ພະແນກແຜນການຂອງບັນດາກະຊວງ ໄດ້ຮັບຄວາມຮູ້ ແລະ ທັກສະໃນທາງປະຕິບັດການຄຸ້ມຄອງການລົງທຶນລັດ. ເພື່ອໃຫ້ບັນລຸຈຸດປະສົງພື້ນຖານດັ່ງກ່າວ ຈຶ່ງໄດ້ກຳນົດ 3 ຈຸດປະສົງສະເພາະດັ່ງລຸ່ມນີ້:

- ✦ ຈຸດປະສົງຂອງການຝຶກອົບຮົມ
- ✦ ເພື່ອໃຫ້ພະນັກງານຈາກ ພຜທ ແຂວງ ແລະກົມ/ພະແນກແຜນການ ຂອງບັນດາກະຊວງ ເຂົ້າໃຈເຖິງຂັ້ນຕອນການສະເໜີ ຂໍງົບປະມານປະຈໍາປີ ແລະ ການນໍາໃຊ້ວິທີການຄຸ້ມຄອງແຕ່ລະຢ່າງ
- ✦ ເພື່ອໃຫ້ພະນັກງານຈາກ ພຜທ ແຂວງ ແລະ ກົມ/ພະແນກແຜນການຂອງ ບັນດາກະຊວງ ສາມາດອະທິບາຍ ແຕ່ລະວິທີການຄຸ້ມຄອງໃຫ້ບັນດາເຈົ້າຂອງໂຄງການ ແລະ ພະນັກງານຂັ້ນເມືອງຟັງໄດ້[4].
- ✦ ເພື່ອໃຫ້ພະນັກງານຈາກ ພຜທ ແຂວງແລະກົມ/ພະແນກການຂອງບັນດາກະຊວງສະເໜີທິດ ທາງການລົງທຶນລັດປະຈໍາປີ ຕາຕະລາງດໍາເນີນການ ແລະ ໂຄງຮ່າງງົບປະມານຕໍ່ບັນດາການນໍາໃນອົງການຈັດຕັ້ງຂອງເຂົາເຈົ້າ.

ການຝຶກອົບຮົມປະກອບດ້ວຍ 9 ຫົວຂໍ້ທີ່ຈໍາເປັນ ແລະພຽງພໍໃນການບັນລຸ 3 ຈຸດປະສົງຂ້າງເທິງ[5]

**-ຫົວຂໍ້ຝຶກອົບຮົມ-**

| | |
|---|---|
| ຫົວຂໍ້ທີ 1 | ກົດໝາຍວ່າດ້ວຍການລົງທຶນລັດ |
| ຫົວຂໍ້ທີ 2 | ຂັ້ນຕອນການສະເໜີຂໍງົບປະມານ PIP ປະຈໍາປີ |
| ຫົວຂໍ້ທີ 3 | ການຄຸ້ມຄອງທາງດ້ານການເງິນຂອງການລົງທຶນລັດ |
| ຫົວຂໍ້ທີ 4 | ການສະເໜີໂຄງການ ແລະ ການດໍາເນີນການປະເມີນໂຄງການ |
| ຫົວຂໍ້ທີ 5 | ການຄຸ້ມຄອງທຶນສົມທົບ ODA |
| ຫົວຂໍ້ທີ 6 | ການປະເມີນແບບປຽບທຽບກັບເຄື່ອຈຸດປະສົງແຜນງານ |

**ສໍາລັບພະນັກງານ ພຜທ ເທົ່ານັ້ນ**: ການປະເມີນຜົນຂອງການປະເມີນ, ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ

**ສໍາລັບພະນັກງານ ກົມ/ພະແນກແຜນການກະຊວງເທົ່ານັ້ນ**: ການປະເມີນໂຄງການໂດຍ ສປາດສ (SPAS)

## [ ການປະເມີນການຝຶກອົບຮົມ]

---

[4] ການອະທິບາຍໃຫ້ບັນດາພະນັກງານຂັ້ນເມືອງຟັງແມ່ນບໍ່ໄດ້ລວມເຈົ້າໃນຈຸດປະສົງຂອງການຝຶກອົບຮົມຂັ້ນກະຊວງ

[5] ຫົວຂໍ້ຝຶກອົບຮົມ ແມ່ນຄືກັນຍົກເວັ້ນ ຫົວຂໍ້ທີ 7 ແລະ ທີ 9 ເຊິ່ງໄດ້ອີງຕາມຄວາມຈໍາເປັນຂອງອົງການຈັດຕັ້ງເປົ້າໝາຍ

ບັນດາຈຸດຫຼັກທີ່ໃຊ້ໃນການປະເມີນ ແລະ ວິທີການປະເມີນລຸ່ມນີ້ແມ່ນ ໄດ້ຖືກກຳນົດຂຶ້ນ ເພື່ອຈັດລະດັບຄວາມສຳເລັດ ແລະ ເພື່ອປະເມີນການຝຶກອົບຮົມ TOT

| ຈຸດປະສົງ | ຈຸດຫຼັກທີ່ໃຊ້ໃນການປະເມີນ | ວິທີການປະເມີນ |
|---|---|---|
| ຈຸດປະສົງທີ (1) | ✓ ການສອບເສັງພາຍຫຼັງຝຶກອົບຮົມສຳເລັດ 70 %<br>✓ ການສອບເສັງພາຍຫຼັງມີການຝຶກອົບຮົມພັດທະນາດີຂຶ້ນທຽບໃສ່ການສອບກ່ອນການຝຶກອົບຮົມ | ✓ ຜົນຂອງການສອບເສັງກ່ອນແລະຫຼັງການຝຶກອົບຮົມ<br>✓ ຜົນຂອງການເຮັດບົດຝຶກຫັດເປັນກຸ່ມ<br>✓ ຄຸນນະພາບຂອງສອງສິ່ງທີ່ກ່າວມາຂ້າງເທິງ<br>✓ ການສັງເກດການໂດຍລວມ ແລະ<br>✓ ຜົນຂອງການປະເມີນການຝຶກອົບຮົມຈາກແບບສອບຖາມໂດຍຜູ້ເຂົ້າຮ່ວມ |
| ຈຸດປະສົງທີ (2) | ✓ ໄດ້ຮັບຄວາມໝັ້ນໃຈໃນການອະທິບາຍຕໍ່ສະຖານະ<br>✓ ຜົນຂອງການເຮັດບົດຝຶກຫັດບັນລຸລະດັບຄວາມພໍໃຈ. | |
| ຈຸດປະສົງທີ (3) | ຄຸນນະພາບຂອງບັນດາໝາກຜົນ<br>✓ ທິດທາງການສ້າງແຜນງົບປະມານປະຈຳປີ<br>✓ ຕາຕະລາງການດຳເນີນການສະເໜີຂໍງົບປະ ມານປະຈຳປີ<br>✓ ໂຄງຮ່າງງົບປະມານປະຈຳປີ | |

**[ ຜົນຂອງການປະເມີນບັນດາຈຸດປະສົງຂອງການຝຶກອົບຮົມ TOT]**

ສະຫຼຸບແລ້ວ ຈຸດປະສົງທັງສາມຂ້າງເທິງນັ້ນໄດ້ບັນລຸ. ຕາຕະລາງລຸ່ມນີ້ຊີ້ໃຫ້ເຫັນລະດັບຄວາມສຳເລັດຂອງແຕ່ລະຈຸດປະສົງຕາມລຳດັບ.

> ຈຸດປະສົງທີ 1
>
> ເພື່ອໃຫ້ພະນັກງານຈາກ ພຜທ ແຂວງແລະກົມ/ພະແນກແຜນການຂອງບັນດາກະຊວງເຂົ້າ ໃຈເຖິງຂັ້ນຕອນການສະເໜີຂໍງົບປະມານປະຈຳປີ ແລະການນຳໃຊ້ວິທີການຄຸ້ມຄອງແຕ່ລະຢ່າງ

ໂດຍລວມແລ້ວ, ລະດັບຜົນສຳເລັດຂອງຈຸດປະສົງທີ (1) ແມ່ນສູງ. ສຳລັບການຝຶກອົບຮົມທັງ 4 ຊຸດ, ເປີເຊັນສະເລ່ຍຂອງຄະແນນສອບເສັງກ່ອນການຝຶກອົບຮົມແມ່ນ 54% ເຖິງ 56% ແຕ່ເປີເຊັນສອບເສັງສະເລ່ຍພາຍຫຼັງການຝຶກແມ່ນ ເພີ່ມຂຶ້ນເປັນ 69% ການຝຶກອົບຮົມໃນຊຸດທີ 3 ມີການພັດທະນາ ສູງທີ່ສຸດໂດຍມີຄະແນນສະເລ່ຍເພີ່ມຂຶ້ນເຖິງ 9 ຄະແນນໃນການສອບເສັງພາຍ

ຫຼັງການຝຶກອົບຮົມ. ຍິ່ງໄປກ່ວານັ້ນ ພະນັກງານ 92 ທ່ານ ສາມາດສອບເສັງຜ່ານລະດັບຄາດໝາຍ ຄືບັນລຸເຖິງຢ່າງຕໍ່າ 70% ຂອງຄະແນນເຕັມ[6]. ໃນບົດທົດສອບ ໄດ້ກວມເອົາທຸກໆຫົວຂໍ້ ຍົກເວັ້ນຫົວຂໍ້ທີ 1: ກົດໝາຍວ່າດ້ວຍການລົງທຶນລັດ. ຄຳຖາມຢູ່ໃນບົດທົດສອບແມ່ນເນັ້ນໃສ່ການໄຫຼວຽນຂອງຂັ້ນຕອນສະເໜີຂໍງົບປະມານການລົງທຶນລັດ ແລະ ວິທີການນຳໃຊ້ເຄື່ອງມືການຄຸ້ມຄອງການລົງທຶນລັດແຕ່ລະຢ່າງ. ຜົນຂອງບົດທົດສອບຊີ້ໃຫ້ເຫັນວ່າພະນັກງານ ຂອງ ພຜທ ແຂວງ ແລະ ກົມ/ພະແນກແຜນການກະຊວງສາມາດເຂົ້າໃຈເຖິງບັນດາຫົວຂໍ້ດັ່ງກ່າວ.

| | ຄະແນນສະເລ່ຍຂອງບົດທົດສອບກ່ອນຝຶກ (% ຂອງຄະແນນເຕັມ) | ຄະແນນສະເລ່ຍຂອງບົດທົດສອບພາຍຫຼັງຝຶກ(% ຂອງຄະແນນເຕັມ) | ຄະແນນສະເລ່ຍຂອງ ການພັດທະນາ | ຈຳນວນຜູ້ເຂົ້າຮ່ວມທີ່ເສັງຜ່ານ (% ຂອງຜູ້ເຂົ້າຮ່ວມທັງໝົດ) |
|---|---|---|---|---|
| ຊຸດທີ 1 | 16.2 ຄະແນນ (54%) | 21.8 ຄະແນນ (73%) | 5.6 ຄະແນນ | 18 ທ່ານ (64%) |
| ຊຸດທີ 2 | 16.7 ຄະແນນ (56%) | 21.0 ຄະແນນ (70%) | 4.3 ຄະແນນ | 24 ທ່ານ (62%) |
| ຊຸດທີ 3 | 16.8 ຄະແນນ (56%) | 25.8 ຄະແນນ (86%) | 9.0 ຄະແນນ | 31 ທ່ານ (94%) |
| ຊຸດທີ 4 | 13.7 ຄະແນນ (55%) | 17.3 ຄະແນນ (69%) | 3.6 ຄະແນນ | 19 ທ່ານ (61%) |

ໝາຍເຫດ: ຄະແນນເຕັມສຳລັບຊຸດທີ 1 ເຖິງ 3 ແມ່ນ 30 ຄະແນນ ( ຄະແນນທີ່ໄດ້ຕາມລະດັບ ຄາດໝາຍແມ່ນ 21 ຄະແນນຂຶ້ນໄປ) ສ່ວນຄະແນນເຕັມສຳລັບຊຸດທີ 4 ແມ່ນ 25 ຄະແນນ(ຄະ ແນນທີ່ໄດ້ລະດັບຄາດໝາຍແມ່ນ 17 ຄະແນນ)

ໂດຍລວມແລ້ວ ຄວາມເຂົ້າໃຈຕໍ່ກັບເນື້ອໃນການຝຶກອົບຮົມຂອງຜູ້ເຂົ້າຮ່ວມແມ່ນສູງ ອີງຕາມຜົນການປະເມີນຈາກແບບສອບຖາມ ລະດັບຄວາມເຂົ້າໃຈສຳລັບຫົວຂໍ້ທີ 1: ກົດໝາຍກວ່າດ້ວຍ ການລົງທຶນລັດແມ່ນສູງກ່ວາໝູ່ (4.2) ຕໍ່ມາແມ່ນຫົວຂໍ້ທີ 4: ການສະເໜີໂຄງການ (4.1) ຫົວຂໍ້ທີ 2: ຂັ້ນຕອນການສະເໜີຂໍງົບປະມານປະຈຳປີ (4.1) ຫົວຂໍ້ທີ 4: ການປະເມີນໂຄງການ (4.0)[7] ແລະຫົວຂໍ້ທີ 8: ການປະເມີນແບບປຽບທຽບກັບ POT(4:00)

---

[6] ບົດທົດສອບກ່ອນ ແລະຫຼັງຝຶກອົບຮົມຖືກອອກແບບໃນເງື່ອນໄຂ ແລະຂັ້ນຕອນອັນດຽວກັນ ສຳລັບ 4 ຊຸດຝຶກອົບຮົມເພື່ອເພີ່ມເຕດິດໃຫ້ແກ່ຜົນການສອບເສັງ

[7] ໃນຫົວຂໍ້ທີ 4 ມີ 2 ຫົວຂໍ້ຍ່ອຍ ຢູ່ໃນແບບສອບຖາມ ຄື ການສະເໜີໂຄງການ –ແລະການປະເມີນໂຄງການ.

| ຫົວຂໍ້ຝຶກອົບຮົມ | | ຊຸດ 1 | ຊຸດ 2 | ຊຸດ 3 | ຊຸດ 4 | **ສະເລ່ຍ** |
|---|---|---|---|---|---|---|
| 1 | ກົດໝາຍວ່າດ້ວຍການລົງທຶນລັດ | 4.0 | 4.4 | 4.4 | 4.1 | **4.2** |
| 2 | ຂັ້ນຕອນການສະເໜີຂໍງົບປະມານ PIP ປະຈຳປີ | 3.8 | 4.2 | 4.2 | 4.1 | **4.1** |
| 3 | ການຄຸ້ມຄອງທາງດ້ານການເງິນຂອງການລົງທຶນລັດ | 3.5 | 4.1 | 4.1 | 4.0 | **3.9** |
| 4 | ການສະເໜີໂຄງການ | 4.0 | 4.0 | 4.2 | 4.2 | **4.1** |
| | ການດຳເນີນການປະເມີນໂຄງການ | 4.1 | 4.1 | 4.2 | 3.9 | **4.0** |
| 5 | ການຄຸ້ມຄອງທຶນສົມທົບ ODA | 3.6 | 4.2 | 4.1 | 4.0 | **4.0** |
| 6 | ການປະເມີນແບບປຽບທຽບກັບເຄືອຈຸດປະສົງແຜນງານ | 4.0 | 4.0 | 4.1 | 3.9 | **4.0** |
| ແຂວງ | ການປະເມີນຜົນຂອງການປະເມີນ | 3.6 | 4.0 | 4.2 | | **3.9** |
| | ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ | 3.9 | 4.1 | 4.0 | | **4.0** |
| ກະຊວງ | ການປະເມີນໂຄງການໂດຍ ສປາດສ (SPAS) | | | | 3.9 | **3.9** |

ໝາຍເຫດ: ລະດັບຄວາມເຂົ້າໃຈແມ່ນ 1:ຕ່ຳຫຼາຍ, 2: ຕ່ຳ, 3: ປານກາງ, 4: ສູງ, 5: ສູງຫຼາຍ

ຈຸດປະສົງທີ 2:

ເພື່ອໃຫ້ພະນັກງານຈາກ ພຜທ ແຂວງແລະກົມ/ພະແນກແຜນການຂອງບັນດາກະຊວງສາມາດອະທິບາຍແຕ່ລະວິທີການຄຸ້ມຄອງໃຫ້ບັນດາເຈົ້າຂອງໂຄງການ ແລະ ພະນັກງານຂັ້ນເມືອງຟັງໄດ້.

ລະດັບຜົນສຳເລັດຂອງຈຸດປະສົງທີ 1 ແມ່ນບັນລຸຢູ່ໃນລະດັບທີ່ໜ້າພໍໃຈ. ການຝຶກອົບຮົມ"ເພື່ອສ້າງຄູຝຶກ" ຄັ້ງນີ້ສ້າງໂອກາດໃຫ້ຜູ້ເຂົ້າຮ່ວມຂຶ້ນຝຶກຫັດບັນຍາຍໃນ 5 ຫົວຂໍ້ຕໍ່ໄປນີ້: ຂັ້ນຕອນການສະເໜີຂໍງົບປະມານປະຈຳປີ, ການສະເໜີໂຄງການ, ການຄຸ້ມຄອງທຶນສົມທົບກັບໂຄງການ ODA , ການປະເມີນແບບປຽບທຽບແລະການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ. ຜູ້ທີ່ຂຶ້ນມາຝຶກຫັດບັນຍາຍສ່ວນຫຼາຍແມ່ນຕັ້ງໃຈອະທິບາຍກ່ຽວກັບເນື້ອໃນຂອງແຕ່ລະຫົວຂໍ້ ພ້ອມກັບມີຄວາມໝັ້ນໃຈໃນຕົນເອງສູງ. ຜົນການປະເມີນຊີ້ໃຫ້ເຫັນວ່າ ພະນັກງານ ພຜທ ແຂວງ ແລະ ກົມ/ພະແນກແຜນການກະຊວງ ມີບາດກ້າວໄປໃນທາງບວກໃນບົດບາດຂອງການເປັນໃຈກາງໃນການຄຸ້ມຄອງໂຄງການລົງທຶນລັດໃນແຂວງແລະກະຊວງຂອງຕົນເອງ. ແຕ່ເນື່ອງຈາກມີຂໍ້ຈຳກັດບາງຢ່າງເຮັດໃຫ້ມີພຽງ1 ສ່ວນ 3 ຂອງຜູ້ເຂົ້າຮ່ວມທັງໝົດສາມາດຂຶ້ນຝຶກຫັດບັນຍາຍໃນຄັ້ງນີ້. ດັ່ງນັ້ນ,ມັນຈຳເປັນຕ້ອງສ້າງໂອກາດໃຫ້ຜູ້ທີ່ຍັງບໍ່ທັນໄດ້ຂຶ້ນຝຶກຫັດບັນຍາຍໄດ້ມີໂອກາດຂຶ້ນຝຶກຫັດບັນຍາຍໃນຄັ້ງຕໍ່ໄປ.

ຈຸດປະສົງທີ 3

ເພື່ອໃຫ້ພະນັກງານຈາກ ພຜທ ແຂວງແລະກົມ/ພະແນກການຂອງບັນດາກະຊວງສະເໜີທິດທາງການລົງທຶນລັດປະຈຳປີ ຕາຕະລາງດຳເນີນການ ແລະ ໂຄງຮ່າງງົບປະມານຕໍ່ບັນດາການນຳໃນອົງການຈັດຕັ້ງຂອງເຂົາເຈົ້າ.

ຈຸດປະສົງທີ 3 ຂອງການຝຶກອົບຮົມແມ່ນແນໃສ່ການສ້າງຕາຕະລາງເວລາໃນການສ້າງແຜນງົບປະມານປະຈຳປີ ພ້ອມກັບການພິຈາລະນາເນື້ອໃນຂອງທິດທາງການລົງທຶນລັດປະຈຳປີ ແລະ ໂຄງຮ່າງງົບປະມານການລົງທຶນລັດທີ່ໄດ້ເຮັດຝຶກຫັດໃນສຳມະນາທີ່ຜ່ານມາ ຜູ້ເຂົ້າຮ່ວມພຽງແຕ່ ອີງຕາວັນເວລາທີ່ກຳນົດໃຫ້ເບື້ອງຕົ້ນຈາກກະຊວງແຜນການເຊັ່ນ ກຳນົດເວລາສົ່ງບັນຊີລາຍຊື່ເທົ່ານັ້ນ ພວກເຂົາເຈົ້າກໍ່ສາງມາດພັດທະນາຕາຕະລາງເວລາການສ້າງແຜນສະເໜີຂໍງົບປະມານ ແຕ່ລະຂັ້ນຕອນຂອງແຂວງແລະກະຊວງຂອງເຂົາເຈົ້າໄດ້ຢ່າງປະສົບຜົນສຳເລັດ. ຕາຕະລາງທີ່ຖືກຕື່ມໂດຍຜູ້ເຂົ້າຮ່ວມ ຖືກຕິດໄວ້ຢູ່ຫ້ອງການ ພຜທ ຂອງບາງແຂວງ ບ່ອນທີ່ຜູ້ຄົນກາຍໄປມາ ສາມາດເຫັນໄດ້.

### (3) ການຝຶກອົບຮົມການຄຸ້ມຄອງການລົງທຶນລັດສຳລັບເຈົ້າຂອງໂຄງການຂັ້ນແຂວງ

ການຝຶກອົບຮົມການຄຸ້ມຄອງການລົງທຶນລັດສຳລັບເຈົ້າຂອງໂຄງການຂັ້ນແຂວງ (ຫຼັງຈາກນີ້ຈະຖືກເອີ້ນວ່າ "ການຝຶກອົບຮົມຢູ່ແຂວງ") ໄດ້ຖືກຈັດຂຶ້ນເລີ່ມແຕ່ວັນທີ 13 ທັນວາ 2010 ເຖິງວັນທີ 7 ມັງກອນ 2011. ການຝຶກອົບຮົມຢູ່ແຂວງແມ່ນໄດ້ຖືກຈັດຂຶ້ນໂດຍ ພຜທ ຂອງແຕ່ລະແຂວງແລະນະຄອນຫຼວງ ໂດຍເຊີນບັນດາພະແນກການຫຼັກກໍ່ຄືບັນດາເຈົ້າຂອງໂຄງການເຂົ້າຮ່ວມການຝຶກອົບຮົມໃນຄັ້ງນີ້ ເຊິ່ງມີຈຸດປະສົງເພື່ອໃຫ້ເຈົ້າຂອງໂຄງການເຂົ້າໃຈເຖິງຂັ້ນຕອນການສະເໜີຂໍງົບປະມານ ແລະການນຳໃຊ້ບັນດາວິທີການ ແລະ ເຄື່ອງມືການຄຸ້ມຄອງການລົງທຶນລັດ.

ຖ້າຫາກບັນດາຂັ້ນຕອນການສະເໜີຂໍງົບປະມານການລົງທຶນລັດປະຈຳປີ 2011-12ນີ້ ໄດ້ຖືກດຳເນີນໄປຢ່າງສະດວກລາບລື້ນດີ, ພວກເຮົາສາມາດເວົ້າໄດ້ວ່າ ຈຸດປະສົງຂອງການຝຶກອົບຮົມແມ່ນບັນລຸຢ່າງເປັນທີ່ໜ້າພໍໃຈ. ຄວາມມຸ້ງຫວັງທີ່ສຳຄັນຢ່າງນຶ່ງໃນການຝຶກອົບຮົມຄັ້ງນີ້ ແມ່ນເພື່ອສ້າງຄວາມເຂົ້າໃນຮ່ວມກັນກັບຫົວໜ້າພະແນກ/ຮອງພະແນກ ແລະພະນັກງານຂອງ ເຂົາເຈົ້າໃນການກະກຽມຂັ້ນຕອນການສະເໜີຂໍງົບປະມານປະຈຳປີ ແຕ່ບໍ່ເປັນດັ່ງຫວັງປານໃດ ບັນດາຫົວໜ້າພະແນກ ແລະ ຮອງພະແນກຕ່າງໆຖືກເຊີນໃຫ້ເຂົ້າຮ່ວມຝຶກອົບຮົມໃນມື້ທຳອິດ (ໝົດມື້) ແຕ່ສ່ວນຫຼາຍຫົວໜ້າ/ຮອງຫົວໜ້າພະແນກເຂົ້າຮ່ວມຝຶກອົບຮົມນຳພຽງແຕ່ຕອນເຊົ້າຂອງມື້ທຳອິດເທົ່ານັ້ນ. ພວກເຂົາບໍ່ໄດ້ຢູ່ເຮັດບົດຝຶກຫັດທີ່ເປັນແກນຫຼັກກໍ່ຄືການພັດທະນາທິດທາງການລົງທຶນລັດຂອງຂະແໜງການຂອງຕົນເອງ, ການຄາດຄະເນງົບປະມານ

ແລະ ການກຳ ນົດເວລາໃສ່ ແຕ່ລະຂັ້ນຕອນສະເໜີຂໍ້ງົບປະມານ ການລົງທຶນລັດຮ່ວມກັບພະນັກງານຂອງເຂົາເຈົ້າ.

ໃນເກືອບໝົດທຸກແຂວງ ຈຳນວນຜູ້ເຂົ້າຮ່ວມຫຼາຍກ່ວາເຄິ່ງທີ່ບໍ່ເຄີຍເຂົ້າຮ່ວມຝຶກອົບຮົມກັບໂຄງການ ພີແຄັບ 2(PCAP2) ມາກ່ອນ ສະນັ້ນ ມັນອາດຈະເປັນການຍາກສຳລັບຜູ້ທີ່ບໍ່ເຄີຍຮ່ວມຝຶກອົບຮົມມາກ່ອນໃນການເຂົ້າໃຈເຖິງວິທີການ ແລະ ບັນດາເຄື່ອງມືການຄຸ້ມຄອງການລົງທຶນລັດທີ່ຖືກພັດທະນາຂຶ້ນ ໂດຍໂຄງການ. ແຕ່ຜ່ານການສັງເກດເບິ່ງ ຜົນຂອງການຝຶກອົບຮົມພ້ອມກັບຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມຝຶກອົບຮົມໃນລະຫວ່າງນັ່ງຟັງການບັນຍາຍ ແລະ ເຮັດບົດຝຶກຫັດ ແລະ ຍັງມີການສື່ສານລະຫວ່າງຜູ້ເຂົ້າຮ່ວມ ແລະ ຄູຝຶກ ພຜທ ແລ້ວ, ພວກເຮົາສາມາດເວົ້າໄດ້ວ່າ ຜູ້ເຂົ້າຮ່ວມສ່ວນຫຼາຍແມ່ນ ເຂົ້າໃຈເນື້ອໃນຂອງການຝຶກອົບຮົມ ໄດ້ດີພໍສົມຄວນໃນລະດັບ ທີ່ສາມາດນຳໃຊ້ເຂົ້າໃນໜ້າວຽກການຄຸ້ມຄອງການລົງທຶນລັດໃນໂຕຈິງໄດ້.

**[ທີມຜູ້ສະໜັບສະໜູນການຝຶກອົບຮົມຈາກກະຊວງ ຜທ ແລະຕາຕະລາງ]**

ຄູຝຶກຈາກກະຊວງ ຜທ ຈຳນວນ 2 ທ່ານ ໄດ້ຖືກສົ່ງໄປແຕ່ລະແຂວງ ແລະນະຄອນຫຼວງເຊິ່ງມີຈຸດປະສົງ ເພື່ອເປັນຜູ້ໃຫ້ຄຳປຶກສາ ແລະ ສະໜັບສະໜູນທາງດ້ານເຕັກນິກ ໃຫ້ແກ່ພຜທ ຜູ້ ທີ່ເປັນເຈົ້າການໃນການຈັດຝຶກອົບຮົມ. ບັນດາຄູຝຶກກະຊວງ ຜທ ໄດ້ຖືກແບ່ງເປັນ 5 ທີມທີ່ເດີນທາງ ໄປບັນດາແຂວງດັ່ງຕາຕະລາງລຸ່ມນີ້:

| ວັນທີ | ທີມ 1 | ທີມ 2 | ທີມ 3 | ທີມ 4 | ທີມ 5 |
|---|---|---|---|---|---|
| 13～14/12 | - | - | ໄຊຍະບູລີ | - | ຫຼວງພະບາງ |
| 16～17/12 | ຄຳມ່ວນ | ຫົວພັນ | - | ອຸດົມໄຊ | ບໍ່ແກ້ວ |
| 20～21/12 | ບໍລິຄຳໄຊ | ສາລະວັນ | - | - | - |
| 23～24/12 | ສະຫວັນນະເຂດ | ຈຳປາສັກ | ເຊກອງ | - | ນະຄອນຫຼວງ |
| 27～28/12 | ວຽງຈັນ | - | ອັດຕະປື | ຫຼວງພະບາງ | ຜົ້ງສາລີ |
| 3～4/1, 2011 | - | ຊຽງຂວາງ | - | - | - |

### ທີມຄູຝຶກກະຊວງ ຜທ ປະກອບດ້ວຍສະມາຊິກດັ່ງຕໍ່ໄປນີ້:

| ທີມ | ສະມາຊິກຂອງແຕ່ລະທີມ |
|---|---|
| ທີມ 1 | ທ່ານ ວິລະພັນ (MPI-DOE), ທ່ານ ສອນນະພາ (MPI-DOP) |
| ທີມ 2 | ທ່ານ ບັນລຸສິດ, ທ່ານ ວຽງຄໍາ (ທັງສອງທ່ານມາຈາກ MPI-DOE) |
| ທີມ 3 | ທ່ານ ນ. ວິລາວັນ, ທ່ານ ເຊັງເຮີ (ທັງສອງທ່ານມາຈາກ MPI-DOE) |
| ທີມ 4 | ທ່ານ ນ. ສິມພັດ (MPI-DOE), ທ່ານ ຄໍາຜາຍ (MPI-DIC)* |
| ທີມ 5 | ທ່ານ ສິມໄຊ (MPI-DOP), ທ່ານ ສິມບັດ (MPI-DOE) |

* ທ່ານ ບັນລຸສິດ ໄປ ແຂວງຫຼວງພະບາງແທນ ທ່ານ ນ. ສິມພັດ ໃນວັນທີ 27～28/12

## [ ຜູ້ເຂົ້າຮ່ວມ ]

ການຝຶກອົບຮົມແມ່ນອອກແບບມາເພື່ອແນໃສ່ 8 ຂະແໜງການຫຼັກ (DOH, DOE, DOEM, DAF, DIC, DPWT and DLSW) ທີ່ເປັນຜູ້ຄຸ້ມຄອງໂຄງການລົງທຶນລັດ ເກືອບທັງໝົດທີ່ຖືກຈັດຕັ້ງປະຕິບັດຢູ່ຂັ້ນແຂວງ. ດັ່ງນັ້ນ ທາງໂຄງການ ແລະ ກະຊວງ ຜທ ສະເໜີໃຫ້ ພຜທ ເຊີນຜູ້ເຂົ້າຮ່ວມຈາກບັນດາຂະແໜງການຫຼັກດັ່ງກ່າວ. ແຕ່ນອກຈາກ 8 ພະແນກການຫຼັກແລ້ວ ບາງແຂວງໄດ້ເຊີນຜູ້ເຂົ້າຮ່ວມຈາກພະແນກການອື່ນໆ ແລະ ອົງການຈັດຕັ້ງຂັ້ນແຂວງ ( ເຊັ່ນ:ຫ້ອງວ່າການແຂວງ, ສະຫະພັນແມ່ຍິງ ແລະອື່ນໆ) ແລະ ຫ້ອງການແຜນການຂອງເມືອງ, ພະນັກງານ ພຜທ ທີ່ບໍ່ສາມາດເຂົ້າຮ່ວມການຝຶກອົບຮົມ ເພື່ອສ້າງຄູຝຶກທີ່ນະຄອນຫຼວງ ກໍ່ໄດ້ເຂົ້າຮ່ວມຝຶກອົບຮົມຢູ່ແຂວງໃນຄັ້ງນີ້.

ຫົວໜ້າພະແນກ ແລະ ຮອງພະແນກຂອງແຕ່ລະຂະແໜງການ ກໍ່ໄດ້ຖືກເຊີນເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ກໍ່ຍ້ອນມີເຫດຜົນສະເພາະບາງປະການຄື ເປັນພວກເຂົາເຈົ້າເປັນກຸນແຈສໍາຄັນໃນການກໍານົດທິດທາງ, ຄາດຄະເນງົບປະມານ ແລະກະກຽມຕາຕະລາງເວລາສໍາລັບ ແຕ່ລະພະແນກການ. ມັນເປັນສິ່ງຈໍາເປັນທີ່ຕ້ອງການມີສ່ວນຮ່ວມຂອງ ບັນດາຄະນະພະແນກໃນຫົວຂໍ້ຝຶກອົບຮົມທີ່ກ່ຽວພັນກັບການສະເໜີ ຂໍງົບປະມານປະຈໍາປີ ເຊິ່ງປະກອບມີການບັນຍາຍ ແລະ ການເຮັດບົດຝຶກຫັດໃນມື້ທໍາອິດ(ໝົດມື້). ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນ ຈໍານວນຜູ້ເຂົ້າຮ່ວມໃນແຕ່ລະແຂວງ

| ແຂວງ | ຈຳນວນຜູ້ເຂົ້າຮ່ວມ | | | ໝາຍເຫດ |
|---|---|---|---|---|
| | ອາວຸໂສ | ພະນັກງານ | ລວມ | |
| ນະຄອນຫຼວງ | 7 | 32 | 39 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ ຫ້ອງແຜນ ການຂອງ 7 ເມືອງ ແລະ 15 ອົງການຈັດຕັ້ງອື່ນໆ |
| ແຂວງວຽງຈັນ | 5 | 45 | 50 | |
| ບໍລິຄຳໄຊ | 21 | 24 | 45 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ 17 ອົງການຈັດຕັ້ງອື່ນໆ |
| ຄຳມ່ວນ | 6 | 48 | 54 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ ຫ້ອງແຜນ ການຂອງທຸກເມືອງ |
| ສະຫວັນນະເຂດ | 18 | 27 | 45 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ 9 ອົງການຈັດຕັ້ງອື່ນໆ |
| ຈຳປາສັກ | 10 | 40 | 50 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ 6 ອົງການຈັດຕັ້ງອື່ນໆ |
| ສາລະວັນ | 4 | 33 | 37 | |
| ເຊກອງ | 6 | 42 | 48 | |
| ອັດຕະປື | 15 | 30 | 45 | |
| ໄຊຍະບູລີ | 14 | 37 | 51 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ ອົງການພັດທະນາໂຕເມືອງ, ພະແນກ ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບແຂວງ |
| ຫຼວງພະບາງ | 13 | 32 | 45 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ ໂຮງຮຽນວິຈິດສິນ, ອົງການປົກປ້ອງ ແລະປາບປາມຢາເສບຕິດແຂວງ |
| ຊຽງຂວາງ | 13 | 39 | 52 | |
| ຫົວພັນ | 13 | 40 | 53 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ 10 ອົງການຈັດຕັ້ງອື່ນໆ |
| ຜົ້ງສາລີ | 16 | 34 | 50 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ ອົງການພັດທະນາໂຕເມືອງ, ຫ້ອງວ່າການແຂວງ, ແລະໄອຍະການແຂວງ |
| ອຸດົມໄຊ | 13 | 39 | 52 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ 7 ອົງການຈັດຕັ້ງອື່ນໆ |
| ຫຼວງນ້ຳທາ | 23 | 25 | 48 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ ຫ້ອງແຜນການຂອງ 4 ເມືອງ ແລະ 8 ອົງ |

| | | | | |
|---|---|---|---|---|
| | | | | ການຈັດຕັ້ງອື່ນໆ |
| ບໍ່ແກ້ວ | 12 | 35 | 47 | ລວມມີການເຂົ້າຮ່ວມຂອງ ພະນັກງານຈາກ 10 ອົງການຈັດຕັ້ງອື່ນໆ |
| **ລວມ** | **209** | **602** | **811** | |
| **ສະເລ່ຍ** | **12** | **35** | **48** | |

***ພະນັກງານອາວຸໂສ** ແມ່ນບັນດາຫົວໜ້າ ແລະຮອງຫົວໜ້າພະແນກ/ຫ້ອງການ ຂອງພະແນກການ/ອົງການຈັດຕັ້ງຕ່າງໆ

## [ຈຸດປະສົງ ແລະ ຫົວຂໍ້ຝຶກອົບຮົມ]

ຈຸດປະສົງຂອງການຝຶກອົບຮົມມີຢູ່ແຂວງແມ່ນເພື່ອ 8 ຂະແໜງການຫຼັກ ແລະ ບັນດາເຈົ້າຂອງໂຄງການ ເພື່ອໃຫ້ເຂົາເຈົ້າເຂົ້າໃຈເຖິງຂັ້ນຕອນສະເໜີຂໍງົບປະມານປະຈຳປີ ກໍ່ຄືວິທີການຄຸ້ມຄອງທີ່ສຳຄັນ ແລະ ບັນດາເຄື່ອງມືການຄຸ້ມຄອງການລົງທຶນລັດ. ການຝຶກອົບຮົມປະກອບດ້ວຍຫົວຂໍ້ທີ່ຈຳເປັນ ແລະ ພຽງພໍຕໍ່ການບັນລຸຈຸດປະສົງຂອງການຝຶກອົບຮົມ ເຊິ່ງແຕ່ລະຫົວຂໍ້ມີໂຄງຮ່າງລະອຽດດັ່ງລຸ່ມນີ້:

| ຫົວຂໍ້ຝຶກອົບຮົມ | ໂຄງຮ່າງ |
|---|---|
| ກົດໝາຍວ່າດ້ວຍການລົງທຶນລັດ | ໃນການບັນຍາຍໄດ້ອະທິບາຍເຖິງໂຄງຮ່າງແລະຄວາມສຳຄັນຂອງກົດໝາຍວ່າດ້ວຍການລົງທຶນລັດ ທີ່ໄດ້ຖືກອະນຸມັດໃນເດືອນທັນວາປີ 2009 ມາດຕາສະເພາະທີ່ກ່ຽວພັນເຖິງເຈົ້າຂອງໂຄງການກໍ່ໄດ້ຖືກອະທິບາຍ. |
| ຂັ້ນຕອນການສະເໜີຂໍງົບປະມານ PIP ປະຈຳປີ<br>(ບັນຍາຍ ແລະເຮັດບົດຝຶກຫັດ) | ໃນການບັນຍາຍໄດ້ອະທິບາຍເຖິງຄວາມສຳຄັນຂອງການແລະປ່ຽນຄຳຄິດເຫັນໃນການກຳນົດທິດທາງການລົງທຶນລັດ, ການຈັດສັນງົບປະມານແລະຕາຕະລາງເວລາລະຫວ່າງ ພຜທ ແລະແຕ່ລະອົງການຈັດຕັ້ງ ເຮັດບົດຝຶກຫັດກ່ຽວກັບການພັດທະນາທິດທາງ,ຈຳນວນໂຕເລກງົບປະມານແລະຕາຕະລາງເວລາຂອງແຕ່ລະອົງການຈັດຕັ້ງ. |
| ການສະເໜີໂຄງການ ແລະເອກະສານຄັດຕິດທີ່ຈຳເປັນ<br>(ບັນຍາຍ ແລະເຮັດບົດຝຶກຫັດ) | ໃນການບັນຍາຍໄດ້ອະທິບາຍກຳນົດສິ່ງມື້ສຸດທ້າຍ ບັນຊີລາຍຊື່ໂຄງການລົງທຶນລັດ. ບົດຝຶກຫັດແມ່ນເພື່ອກະກຽມການຂຽນຂໍງົບປະມານການລົງທຶນລັດສຳລັບໂຄງການສືບຕໍ່ແລະໂຄງການທີ່ຄ້າງສຳລະ |
| ການຄຸ້ມຄອງທຶນສົມທົບ ODA<br>(ບັນຍາຍ ແລະເຮັດບົດຝຶກຫັດ) | ໃນການບັນຍາຍໄດ້ອະທິບາຍເຖິງຄວາມກ່ຽວພັນກັນລະຫວ່າງການຄຸ້ມຄອງແຜນງານແລະການປະເມີນແບບປຽບທຽບ ເຊິ່ງສະ ແດງອອກຢູ່ໃນການເຮັດບົດຝຶກຫັດ. |
| ການປະເມີນແບບປຽບທຽບກັບເຄືອຈຸດປະສົງແຜນງານ<br>(ບັນຍາຍ ແລະເຮັດບົດຝຶກຫັດ) | ໃນການບັນຍາຍໄດ້ອະທິບາຍເຖິງການສະເໜີທຶນສົມທົບ ODA (ODA-NCB) ແລະ ວິທີການຕື່ມແບບຟອມຂໍ້ມູນໂຄງການແບບ ກະທັດຮັດ(SPIS) |

**[ການປະເມີນຜົນການຝຶກອົບຮົມ 1: ຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມຝຶກອົບຮົມ]**

ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຕື່ມແບບສອບຖາມທີ່ຖາມເຖິງລະດັບຄວາມເຂົ້າໃຈສຳລັບແຕ່ລະຫົວຂໍ້. ຕາຕະລາງລຸ່ມນີ້ຊີ້ໃຫ້ເຫັນເຖິງລະດັບຄວາມເຂົ້າໃຈສະເລ່ຍໂດຍ 567 ທ່ານທີ່ຕອບຄຳຖາມ

| ຫົວຂໍ້ | ສະເລ່ຍ |
|---|---|
| ກົດໝາຍວ່າດ້ວຍການລົງທຶນລັດ | 4.2 |
| ຂັ້ນຕອນການສະເໜີຂໍງົບປະມານ PIP ປະຈຳປີ | 4.0 |
| ການສະເໜີໂຄງການ ແລະເອກະສານຄັດຕິດທີ່ຈຳເປັນ | 4.0 |
| ການຄຸ້ມຄອງທຶນສົມທົບ ODA | 3.8 |
| ການປະເມີນແບບປຽບທຽບກັບເຄື່ອງຈຸດປະສົງແຜນງານ | 3.8 |

ໝາຍເຫດ: ລະດັບຄວາມເຂົ້າໃຈແມ່ນ 1:ຕ່ຳຫຼາຍ, 2: ຕ່ຳ, 3: ປານກາງ, 4: ສູງ, 5: ສູງຫຼາຍ

ຄວາມເຂົ້າໃຈກ່ຽວກັບຫົວຂໍ້ກົດໝາຍວ່າດ້ວຍການລົງທຶນລັດ ມີລະດັບຄວາມເຂົ້າໃຈຂ້ອນຂ້າງສູງ ເພາະພວກເຂົາໄດ້ພົບວ່າຫົວຂໍ້ດັ່ງກ່າວມີຄວາມສຳຄັນຫຼາຍ, ລະດັບຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມໃນຫົວຂໍ້ກ່ຽວກັບການຄຸ້ມຄອງແຜນງານ ແລະ ການປະເມີນແບບປຽບທຽບ ແລະການຄຸ້ມຄອງທຶນສົມທົບຂ້ອນຂ້າງຕ່ຳ ເນື່ອງຈາກຄວາມຈິງທີ່ວ່າ ບັນດາຫົວຂໍ້ດັ່ງກ່າວເປັນຫົວຂໍ້ທີ່ໃໝ່ ແລະ ມັນຕ້ອງການຄວາມເຂົ້າໃຈຢ່າງຮັດກຸມກ່ຽວກັບໂຄງການໃນອົງການຈັດຕັ້ງຂອງຕົນ ແລະໂຄງການທຶນຊ່ວຍເຫຼືອ (ODA) ທີ່ຕ້ອງໄດ້ອາໃສຜູ້ໃຫ້ທຶນ ເປັນຜູ້ຈັດຕັ້ງປະຕິບັດໃນເມື່ອກ່ອນ.

**[ການປະເມີນຜົນການຝຶກອົບຮົມ 2: ການປະເມີນການບໍລິການການຝຶກອົບຮົມໂດຍຜູ້ເຂົ້າຮ່ວມ]**

ຜູ້ເຂົ້າຮ່ວມປະເມີນການບໍລິການການຝຶກອົບຮົມທີ່ຈັດຂຶ້ນໂດຍ ພຜທ ແລະກະຊວງ ຜທ ມີ 3 ລາຍການຖືກຖາມຄື: a) ສະຖານທີ່ຝຶກອົບຮົມ, b) ຊ່ວງເວລາ ແລະ ໄລຍະການເວລາການຝຶກອົບຮົມ c) ຄຸນນະພາບຂອງໂປຣແກມ ແລະ ຄູຝຶກ. ຢູ່ໃນແຕ່ລະຄຳຖາມມີ 5 ລະດັບໃຫ້ຜູ້ເຂົ້າຮ່ວມໄດ້ເລືອກເອົາ ແລະ 5 ລະດັບ ດັ່ງກ່າວມີຕັ້ງແຕ່ລະດັບ 5 ”ດີຫຼາຍ” ຈົນເຖິງລະດັບ 1 ”ອ່ອນຫຼາຍ”

| ຄຳຖາມ | ສະເລ່ຍ |
|---|---|
| **1. ສະຖານທີ່ ແລະສິ່ງອຳນວຍຄວາມສະດວກຕ່າງໆໃນການຈັດຝຶກອົບຮົມ** | 4.4 |
| **2. ຊ່ວງເວລາ ແລະ ໄລຍະເວລາຂອງການຝຶກອົບຮົມ** | |
| 2.1 ຊ່ວງເວລາຂອງການຝຶກອົບ | 3.7 |
| 2.2 ໄລຍະເວລາ(ຈຳນວນມື້)ຂອງການຝຶກອົບ | 3.4 |
| 2.3 ການຈັດສັນເວລາຂອງແຕ່ລະຫົວຂໍ້ | 3.8 |
| **3. ຄຸນນະພາບຂອງຫຼັກສູດການຝຶກອົບຮົມ ແລະຄູຝຶກ** | |
| 3.1 ການຄຸ້ມຄອງການຝຶກອົບຮົມໂດຍລວມ | 4.2 |
| 3.2 ເນື້ອໃນຂອງບົດພາວເວີພອຍ | 4.2 |
| 3.3 ການຈັດກອງປະຊຸມສຳລັບຄູຝຶກ ແລະກຳລະນີສຶກສາ | 4.0 |
| 3.4 ຄູຝຶກ | 3.9 |
| 3.5 ອຸປະກອນ ແລະເອກະສານການຝຶກອົບຮົມ | 4.5 |

ໝາຍເຫດ: ລະດັບ 1: ອ່ອນຫຼາຍ, 2: ອ່ອນ, 3: ປານກາງ, 4: ດີ, 5: ດີຫຼາຍ

ໂດຍລວມແລ້ວຜູ້ເຂົ້າຮ່ວມປະເມີນຜົນຂອງການຝຶກອົບຮົມແມ່ນຢູ່ໃນລະດັບດີ ການປະຕິບັດຂອງຄູຝຶກຜູ້ທີ່ຜ່ານການຝຶກໃຫ້ເປັນຄູຝຶກ ຈາກການຝຶກອົບຮົມຄັ້ງກ່ອນແມ່ນ ຖືກຕີລາຄາໃນລະດັບຂ້ອນຂ້າງສູງ ເຊິ່ງສະແດງໃຫ້ເຫັນຄວາມສຳເລັດຂອງການຝຶກອົບຮົມ ແລະ ຍັງສາມາດເວົ້າໄດ້ວ່າຜົນຂອງການປະເມີນອອກມາດີແນວນີ້ແມ່ນຍ້ອນມີການກະກຽມ ແລະ ການປະຕິບັດທີ່ດີຂອງ ພຜທ ແຕ່ພວກເຮົາສັງເກດເຫັນວ່າ ຜົນຂອງການປະເມີນກ່ຽວກັບຊ່ວງເວລາ ແລະໄລຍະເວລາການຝຶກອົບຮົມຂ້ອນຂ້າງຢູ່ໃນລະດັບຕ່ຳ. ສາຍເຫດກໍ່ເນື່ອງຈາກວ່າຕາຕະລາງການຈັດຝຶກອົບຮົມໄດ້ແຈ້ງຢ່າງກະທັນຫັນ ກ່ອນການຈັດຕັ້ງປະຕິບັດການຝຶກອົບຮົມບໍ່ດົນ ແລະຜູ້ເຂົ້າຮ່ວມຕ້ອງການຈຳນວນມື້ໃນການຝຶກອົບຮົມຫຼາຍຂຶ້ນ.

**[ການຝຶກອົບຮົມ 3: ການປະເມີນຄູຝຶກ ພຜທ ແລະ ຄູຝຶກຈາກກະຊວງ ຜທ]**

ພາຍຫຼັງສຳເລັດການຝຶກອົບຮົມໃນແຕ່ລະແຂວງ ຄູຝຶກ ພຜທ ແລະ ກະຊວງ ຜທ ໄດ້ປະເມີນຜົນການຝຶກອົບຮົມຮ່ວມກັນ ພວກເຂົາເຈົ້າກປະເມີນຄວາມເຂົ້າໃຈ ຂອງຜູ້ເຂົ້າຮ່ວມຕໍ່ກັບຈຸດປະສົງຂອງການຝຶກອົບຮົມ ແລະ ຕໍ່ກັບບັນດາຫົວຂໍ້ຕ່າງໆ ໂດຍອີງຕາມວິໃສທັດຂອງເຂົາເຈົ້າເອງ ການປະເມີນຜົນຈຸດປະສົງຂອງການຝຶກອົບຮົມໄດ້ແບ່ງອອກເປັນ 2 ຈຸດປະສົງຄື:

ຄວາມເຂົ້າໃຈກ່ຽວກັບ **ທິດທາງລວມຂອງງົບປະມານການລົງທຶນລັດປະຈຳປີ** ແລະ **ຂັ້ນຕອນການສ້າງແຜນງົບປະມານປະຈຳປີ**. ຕາຕະລາງລຸ່ມນີ້ໄດ້ອະທິບາຍເຖິງຜົນຂອງການປະເມີນສະເລ່ຍຈາກ 16 ແຂວງ ແລະ ນະຄອນຫຼວງ.

| ການປະເມີນຜົນຂອງແຕ່ລະຫົວຂໍ້ | | ສະເລ່ຍ |
|---|---|---|
| ຄວາມເຂົ້າໃຈໂດຍລວມຂອງຜູ້ເຂົ້າຮ່ວມ | | 4.3 |
| [ຈຸດປະສົງທີ 1]<br>ທິດທາງລວມຂອງການສະເໜີຂໍງົບປະມານປະຈຳປີ | | 4.3 |
| [ຈຸດປະສົງທີ 2]<br>ຂັ້ນຕອນການສ້າງແຜນງົບປະມານປະຈຳປີ | | 4.3 |
| ຫົວຂໍ້ທີ 1 | ກົດໝາຍວ່າດ້ວຍການລົງທຶນລັດ | 4.3 |
| ຫົວຂໍ້ທີ 2 | ຂັ້ນຕອນການສະເໜີຂໍງົບປະມານ PIP ປະຈຳປີ | 4.1 |
| ຫົວຂໍ້ທີ 3 | ການສະເໜີໂຄງການ ແລະເອກະສານຄັດຕິດທີ່ຈຳເປັນ | 4.2 |
| ຫົວຂໍ້ທີ 4 | ການປະເມີນແບບປຽບທຽບກັບເຄືອຈຸດປະສົງແຜນງານ | 4.4 |
| ຫົວຂໍ້ທີ 5 | ການຄຸ້ມຄອງທຶນສົມທົບ ODA | 4.2 |

ຄູຝຶກຈາກກະຊວງ ຜທ ແລະ ພຜທ ເຫັນດີວ່າ ໂດຍລວມແລ້ວຜູ້ເຂົ້າຮ່ວມມີຄວາມເຂົ້າໃຈດີຕໍ່ການຝຶກອົບຮົມຄັ້ງນີ້ ແລະ ຄວາມເຂົ້າໃຈຕໍ່ 2 ຈຸດປະສົງຂອງການຝຶກອົບຮົມດັ່ງກ່າວກໍ່ແມ່ນ ຢູ່ໃນລະດັບສູງ ການຕີລາຄາຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມໂດຍຄູຝຶກ ພຜທ ແລະ ກະຊວງ ຜທ ແມ່ນສູງກ່ວາການຕີລາຄາຂອງຜູ້ເຂົ້າຮ່ວມເອງ. ເຖິງແມ່ນວ່າບໍ່ໄດ້ລົງເລິກເຖິງເຫດຜົນຂອງການຂາດໂຕນກັນລະຫວ່າງການປະເມີນຜົນຂອງທັງສອງຝ່າຍ (ຝ່າຍຄູຝຶກ ແລະ ຝ່າຍຜູ້ຖືກຝຶກ) ແຕ່ທາງຝ່າຍຄູຝຶກຕ້ອງໄດ້ຮັບຮູ້ວ່າ ບາງທີສິ່ງທີ່ຄູຝຶກຄິດອາດແຕກຕ່າງຈາກ ສິ່ງທີ່ຜູ້ເຂົ້າຮ່ວມຄິດກໍ່ເປັນໄດ້.

ຄູຝຶກ ພຜທ ປະເມີນຜົນຕົນເອງໃນເລື່ອງຄຸນນະພາບຂອງ ການບໍລິຫານການຝຶກອົບຮົມ ແລະ ການເປັນຄູ ເຖິງແມ່ນວ່າ ເປັນຄັ້ງທຳອິດຂອງ ພຜທ ໃນການເປັນຜູ້ບໍລິຫານການຝຶກອົບຮົມຢ່າງເຕັມສ່ວນ ຄູຝຶກ ພຜທ ປະເມີນຕົນເອງເລື່ອງ ຄຸນນະພາບຂອງການບໍລິຫານ ແລະ ການເປັນຄູ

ຝຶກແມ່ນຢູ່ໃນລະດັບທີ່ໜ້າເພິ່ງພໍໃຈ, ລະດັບການປະເມີນສະເລ່ຍຂອງທຸກແຂວງ ແລະ ນະຄອນຫຼວງມີດັ່ງຕໍ່ໄປນີ້:

| ຫົວຂໍ້ຂອງການ ປະເມີນ | ສະເລ່ຍ |
|---|---|
| ພຜທ ປະເມີນຕົນເອງໃນເລື່ອງການບໍລິຫານການຝຶກອົບຮົມ | 4.6 |
| ພຜທ ປະເມີນຕົນເອງໃນຖານະເປັນຄູຝຶກ | 4.2 |

1: ອ່ອນຫຼາຍ, 2: ອ່ອນ, 3: ປານກາງ, 4: ດີ, 5: ດີຫຼາຍ

ຄູຝຶກກະຊວງ ຜທ ກໍ່ໄດ້ປະເມີນ 2ມຸມມອງຄື: ການໃຫ້ການສະໜັບສະໜູນຕໍ່ ພຜທ ແມ່ນແທດເໝາະ ຫຼືບໍ່? ແລະ ເລື່ອງການບໍລິຫານການຝຶກອົບຮົມ ແລະການເປັນຄູຝຶກຂອງພຜທ ແມ່ນເໝາະສົມ ຫຼືບໍ່? ຜົນຂອງການປະເມີນໄດ້ສະແດງວ່າການປະຕິບັດຂອງຄູຝຶກ ພຜທ ແລະກະຊວງ ຜທ ແມ່ນຖືກຈັດຢູ່ໃນລະດັບທີ່ໜ້າພໍໃຈ.

| ຫົວຂໍ້ຂອງການ ປະເມີນ | ສະເລ່ຍ |
|---|---|
| ລະດັບຂອງຄູຝຶກຈາກກະຊວງຜທີ່ການສະໜັບສະໜູນ ພຜທ | 4.7 |
| ລະດັບຂອງ ພຜທ ໃນການບໍລິຫານການຝຶກອົບຮົມ ແລະການເປັນຄູຝຶກ | 4.4 |

1: ອ່ອນຫຼາຍ, 2: ອ່ອນ, 3: ປານກາງ, 4: ດີ, 5: ດີຫຼາຍ

## *2.3 ການລົງເລິກແຕ່ລະຫົວຂໍ້*

ບັນດາຫົວຂໍ້ຍ່ອຍລຸ່ມນີ້ ອະທິບາຍເຖິງເນື້ອໃນຂອງບັນດາຫົວຂໍ້ໃນການສຳມະນາ ແລະ ຝຶກອົບຮົມ

### (1) ຫົວຂໍ້ທີ 1: ກົດໝາຍວ່າດ້ວຍການລົງທຶນລັດ

ຫົວຂໍ້ນີ້ແມ່ນແນໃສ່ ການນຳສະເໜີກົດໝາຍວ່າດ້ວຍການລົງທຶນລັດ ໃນການອະທິບາຍລວມທັງການບັນຍາຍ ເຊິ່ງໄດ້ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈ ກ່ຽວກັບກົດໝາຍຫຼາຍຂຶ້ນ. ຄາດວ່າກົດ ໝາຍວ່າດ້ວຍກົດໝາຍວ່າດ້ວຍການລົງທຶນລັດດັ່ງກ່າວ ຈະຊ່ວຍໃຫ້ການຄຸ້ມຄອງການລົງທຶນລັດໄດ້ຮັບການປັບປຸງໃຫ້ດີຂຶ້ນ. ໃນການບັນຍາຍ ໄດ້ກວມເອົາບັນດາເນື້ອໃນດັ່ງລຸ່ມນີ້:

- ✧ ປະຫວັດຄວາມເປັນມາຂອງກົດໝາຍ
- ✧ ການດຳເນີນການຮ່າງ ແລະການອະນຸດມັດກົດໝາຍ
- ✧ ໂຄງສ້າງທັງໝົດຂອງກົດໝາຍ
- ✧ ບັນດາມາດຕາທີ່ສຳຄັນໃນກົດໝາຍ
    - ➢ ການອະທິບາຍຄຳສັບ (ມາດຕາ 3)
    - ➢ ເອກະສານໂຄງການລົງທຶນລັດ (ມາດຕາ 17)
    - ➢ ເງື່ອນໄຂພື້ນຖານໃນການພິຈາລະນະຮັບເອົາໂຄງການລົງທຶນຂອງລັດ (ມາດຕາ 25)
    - ➢ ການຈັດລຽງບູລິມະສິດໂຄງການເຂົ້າໃນແຜນການລົງທຶນຂອງລັດ (ມາດຕາ 27)
    - ➢ ການຈັດຕັ້ງປະມູນໂຄງການລົງທຶນຂອງລັດ (ມາດຕາ 37)
    - ➢ ການຕິດຕາມ,ກວດກາ,ກວດການແລະປະເມີນຜົນ ໂຄງການລົງທຶນຂອງລັດ (ມາດຕາ 40)
    - ➢ ການດັດແກ້ໂຄງການລົງທຶນຂອງລັດ (ມາດຕາ 41)
    - ➢ ການໂຈະໂຄງການລົງທຶນຂອງລັດ (ມາດຕາ 42)
    - ➢ ການອວ່າຍໂຄງການລົງທຶນຂອງລັດ (ມາດຕາ 43)
    - ➢ ການຍົກເລີກໂຄງການລົງທຶນຂອງລັດ (ມາດຕາ 44)
    - ➢ ການນຳໃຊ້ໂຄງການ ແລະການປະເມີນຜົນຫຼັງການນຳໃຊ້ (ມາດຕາ 59)
    - ➢ ຂໍ້ຫ້າມທົ່ວໄປ (ມາດຕາ 61)
    - ➢ ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ (ມາດຕາ 82 ແລະ 83)

ໄດ້ມີການກ່າວເຖິງການນຳໃຊ້ກົດໝາຍດັ່ງກ່າວ ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມສົນໃຈຫຼາຍ ປື້ມກົດໝາຍວ່າດ້ວຍການລົງທຶນລັດ ໄດ້ຖືກແຈກຢາຍ ໃນລະຫວ່າງສຳມະນາ ແລະຝຶກອົບຮົມ ເພື່ອໃຊ້ເປັນບ່ອນອີງ ແລະ ຫຼາຍອົງການຈັດຕັ້ງຍັງຮຽກຮ້ອງຕ້ອງການປື້ມກົດໝາຍດັ່ງກ່າວ ຢາກໃຫ້ແຈກຢາຍເພີ່ມເຕີມ. ພວກເຮົາສາມາດເວົ້າໄດ້ວ່າ ຄວາມສຳຄັນຂອງກົດໝາຍໄດ້ຖືກຮັບຮູ້ກັນຢ່າງມີປະສິດທິພາບ ລະຫວ່າງຄູຝຶກ ແລະ ຜູ້ເຂົ້າຮ່ວມ.

**(2) ຫົວຂໍ້ທີ 2: ຂັ້ນຕອນການສະເໜີຂໍງົບປະມານການລົງທຶນລັດປະຈຳປີ**

ຫົວຂໍ້ນີ້ ກວມເອົາ 3 ຮູບການຂອງງົບປະມານການລົງທຶນລັດປະຈຳປີຄື: ທິດທາງການພັດທະນາ, ການຈັດສັນງົບປະມານ ແລະ ການຄຸ້ມຄອງການເງິນ ແລະຕາຕະລາເວລາສະເໜີຂໍງົບປະມານ. ໃນບົດຝຶກຫັດ ແລະ ຝຶກອົບຮົມກວມເອົາໜ້າທີ່ຮັບຜິດຊອບຂອງແຕ່ລະຂັ້ນ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ເຂົ້າຮ່ວມ. ຕາຕະລາງລຸ່ມນີ້ ຊີ້ໃຫ້ເຫັນເຖິງເນື້ອໃນຂອງຫົວຂໍ້ດັ່ງກ່າວ ໃນແຕ່ລະໂປຼແກມການຝຶກອົບຮົມ

| ໂປຣແກມ | ສຳມະນາ | TOT | ການຝຶກອົບຮົມຢູ່ແຂວງ |
|---|---|---|---|
| ຈຸດປະສົງຂອງຫົວຂໍ້ | ພຜທໄດ້ພັດທະນາ ແລະແຈ້ງທິດທາງການພັດທະນາສຳລັບ ການລົງທຶນລັດ | ພຜທ ພັດທະນາແລະ ແຈ້ງຂັ້ນຕອນການສະເໜີຂໍງົບປະມານສະເພາະເຖິງບັນດາອົງການຈັດຕັ້ງ ທີ່ກ່ຽວຂ້ອງ | ບັນດາພະແນກການ ຕ່າງໆ ພັດທະນາຂັ້ນ ຕອນການສະເໜີຂໍງົບປະມານສຳລັບຂະ ແໜງການຕົນເອງ. |
| ເນື້ອໃນການບັນຍາຍແລະ ບົດຝຶກຫັດ | ພັດທະນາບົດແນະນຳກ່ຽວກັບທິດທາງການຈັດສັນງົບປະມານການລົງທຶນລັດ ໂດຍລະດັບຫົວໜ້າພະແນກ ແລະ ຮອງພະແນກ | ການພັດທະນາຕາຕະລາງການສ້າງແຜນງົບປະມານ ອີງຕາມບົດແນະນຳກ່ຽວ ກັບທິດທາງການພັດທະນາ ແລະການຈັດສັນງົບ ປະມານທີ່ພັດທະນາຂຶ້ນ ໃນລະຫວ່າງການສຳມະນາ | - ຄວາມເຂັ້ມໃຈກ່ຽວກັບກຳນົດເວລາການຍື່ນສະເໜີຂໍງົບປະມານປະຈຳປີ(ບັນຊີ ລາຍຊື່ໂຄງການ)ຂອງບັນດາຂະແໜງການ ຕາມແຈ້ງການຂອງ ພຜທ<br>- ພັດທະນາຂັ້ນຕອນການສະເໜີໂຄງການພາຍໃນຂະແໜງການຂອງຕົນ. |
| ໝາກຜົນ | - ທິດທາງການພັດທະນາສຳລັບການລົງທຶນລັດຂັ້ນແຂວງ<br>- ບົດແນະນຳກ່ຽວກັບການຈັດສັນງົບປະມານການລົງທຶນລັດ | - ການສ້າງຕະຕະລາງແຜນງົບປະມານການລົງທຶນລັດ ແລະການກະ ກຽມບົດແນະນຳ | - ບົດແນະນຳກ່ຽວກັບ ການສ້າງແຜນງົບປະ ມານການລົງທຶນລັດແຕ່ລະຂະແໜງການ |

ໃນການບັນຍາຍ ພຜທໄດ້ຖືກແນະນຳໃຫ້ ພັດທະນາບົດແນະນຳທີ່ຮັດກຸມ ສຳລັບການກະກຽມການສະເໜີຂໍງົບປະມານປະຈຳປີ ລວມທັງ ທິດທາງການພັດທະນາ ທີ່ຈະຕ້ອງໃຊ້ງົບປະມານລົງທຶນໃສ່ ການຈັດສັນງົບປະມານໃຫ້ແຕ່ລະຂະແໜງການ ແລະ ຕາຕະລາງ(ກຳນົດ)ເວລາ ການສ້າງແຜນງົບປະມານ. ລະດັບຫົວໜ້າພະແນກ ແລະ ຮອງພະແນກຕ້ອງໄດ້ເປັນຜູ້ລິເລີ່ມ ໃນການພັດທະນາ ບົດແນະນຳໃຫ້ກາຍເປັນເຄື່ອງມື ເພື່ອໂນ້ມນ້າວບັນດາພະແນກການຕ່າງໆ ແລະເຈົ້າຂອງໂຄງການ. ໃນການບັນຍາຍໄດ້ອະທິບາຍເຖິງ ບັນດາພະແນກການ ແລະ ອົງການຈັດຕັ້ງຕ່າງໆ ຕ້ອງໄດ້ປະຕິບັດຕາມບົດແນະນຳດັ່ງກ່າວ.

ໃນບົດຝຶກຫັດ ທິດທາງການພັດທະນາສຳລັບສົກປີ 2011-12 ໄດ້ຖືກນຳມາແລກປ່ຽນຄຳເຫັນນຳກັນລະຫວ່າງ ພຜທ ແລະ ບັນດາຂະແໜງການຕ່າງໆ. ເຄື່ອງມື ແລະ ວິທີການ ເພື່ອວິເຄາະຖານະພາບທາງດ້ານການເງິນຂອງງົບປະມານການລົງທຶນລັດ ກໍ່ໄດ້ຖືກໃຊ້ເຂົ້າໃນການຮ່າງໂຄງຮ່າງການຈັດສັນງົບປະມານ ຕາຕະລາງເວລາການສ້າງແຜນງົບປະມານ ໄດ້ຖືກສ້າງຂຶ້ນ ແລະ

ແລກປ່ຽນຄຳຄິດເຫັນນຳກັນ ເພື່ອຮັບປະກັນວ່າການຍື່ນສະເໜີຂໍງົບປະມານຈາກບັນດາຂະແໜງ ການ (ພະແນກການ) ມາຍັງ ພຜທ ທັນຕາມກຳນົດເວລາ ແລະ ຖືກຕາມຂັ້ນຕອນ.

**(3) ຫົວຂໍ້ທີ 3: ການຄຸ້ມຄອງງົບປະມານ ແລະ ການເງິນໃນການລົງທຶນລັດ.**

ຢູ່ໃນການຄຸ້ມຄອງການເງິນ ມີ 3 ອົງປະກອບຕໍ່ໄປນີ້ ໄດ້ຖືກບັນຍາຍໃຫ້ຜູ້ເຂົ້າຮ່ວມຟັງ: 1) ພາບລວມກ່ຽວກັບການຄູ້ມຄອງທາງດ້ານການເງິນ, 2) ການວິເຄາະທາງດ້ານການເງິນ ແລະ ການວາງແຜນງົບປະມານໂດຍ ພຜທ ແລະ 3) ມຸມມອງທາງດ້ານການເງິນກາງສະໃໝໂດຍ ພຜທ.

ການບັນຍາຍ 1) **ພາບລວມກ່ຽວກັບການຄຸ້ມຄອງທາງດ້ານການເງິນ** ໄດ້ອະທິບາຍເຖິງຄວາມສຳຄັນຂອງການຄຸ້ມຄອງທາງດ້ານການເງິນ ແລະ ຍັງໄດ້ອະທິບາຍເຖິງໂຕຊີ້ວັດ ທີ່ສຳຄັນຂອງການວິເຄາະທາງດ້ານການເງິນ ແລະ ທິດທາງລວມ ເພື່ອປັບປຸງສະຖານະພາບທາງດ້ານການເງິນຂອງແຂວງ. ຜູ້ເຂົ້າຮ່ວມສຳມະນາ ໄດ້ຄິດໄລ່ໂຕຊີ້ວັດຫຼັກເຊັ່ນ: ວົງເງິນເຖິງກຳນົດ (ມູນຄ່າທີ່ຕ້ອງສຳລະຕາມແຜນ) ແລະໄລຍະເວລາການຊຳລະ ອີງຕາມແຜນການລົງທຶນລັດປີ 2010 - 11 ຂອງແຕ່ລະແຂວງ.

ຕໍ່ມາກໍ່ໄດ້ບັນຍາຍເຖິງ **2) ການວິເຄາະທາງດ້ານການເງິນ ແລະການວາງງາແຜນງົບປະມານໂດຍ ພຜທ** ເຊິ່ງໄດ້ອະທິບາຍເຖິງວິທີການໃຊ້ເຄື່ອງມືວິເຄາະທາງດ້ານການເງິນ ເຂົ້າໃນການດຳເນີນການສ້າງແຜນງົບປະມານ. ການໃຊ້ເຄື່ອງມືທາງດ້ານການເງິນນີ້ ເອີ້ນວ່າ "ແຜ່ນວິເຄາະທາງດ້ານການເງິນການລົງທຶນລັດຂັ້ນແຂວງ" ໂດຍໃຫຜູ້ເຂົ້າຮ່ວມກຳນົດເປົ້າໝາຍ ວົງເງິນເຖິງກຳນົດ ສຳລັບສົກປີ 2011-12 ອີງຕາມບັນຊີລາຍຊື່ ໂຄງການລົງທຶນລັດສົກປີ 2010-11.

ອົງປະກອບສຸດທ້າຍແມ່ນ **3) ມຸມມອງທາງດ້ານການເງິນກາງສະໃໝໂດຍ ພຜທ** ເຊິ່ງໄດ້ອະທິບາຍກ່ຽວກັບວິທີການກຳນົດເປົ້າໝາຍຂອງ ວົງເງິນເຖິງກຳນົດ ໃນກາງສະໃໝ ແລະ ກໍ່ຍັງອະທິບາຍ ເຖິງວິທີການສ້າງແຜນ ເພື່ອຫຼຸດຜ່ອນໄລຍະເວລາການຊຳລະ. ຜູ້ເຂົ້າຮ່ວມຄາດຄະເນ ມູນຄ່າໂຄງການໃໝ່, ວົງເງິນເຖິງກຳນົດ ແລະໄລຍະເວລາການຊຳລະພາຍໃຕ້ເງື່ອນໄຂການເພີ່ມຂຶ້ນຂອງມູນຄ່າໂຄງການໃໝ່. ອົງປະກອບດັ່ງກ່າວນີ້ ໄດ້ອະທິບາຍເຖິງວິທີການຄາດຄະເນວົງເງິນເຖິງກຳນົດ ແລະໄລຍະເວລາການຊຳລະ ເມື່ອແຂວງຈັດຕັ້ງປະຕິບັດໂຄງການ ອີງຕາມແຜນ 5 ປີ ແລະຍັງໄດ້ເນັ້ນໃສ່ການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ ຄວນພິຈາລະນາແຜນການເງິນ 5 ປີນຳ.

ຜ່ານການສຳມະນາໃນຫົວຂໍ້ການຄຸ້ມຄອງ ທາງດ້ານການເງິນການລົງທຶນລັດ ແນວຄວາມຄິດພື້ນຖານ ກ່ຽວກັບການຄຸ້ມຄອງທາງດ້ານການເງິນ ລວມທັງການບັນລຸເຖິງ ຄວາມສົມດຸນລະຫວ່າງ ການພັດທະນາ ແລະ ຄວາມໝັ້ນຄົງທາງດ້ານການເງິນ ໄດ້ຮັບການຍອມຮັບຈາກຜູ້ເຂົ້າຮ່ວມ. ລະດັບຄວາມເຂົ້າໃຈກ່ຽວກັບ ເຄື່ອງມືການຄຸ້ມຄອງທາງດ້ານການເງິນ ແມ່ນສູງຫຼາຍ ໃນການສຳມະນາ ຜູ້ເຂົ້າຮ່ວມໄດ້ເຮັດບົດຝຶກຫັດຫຼາຍບົດເຊັ່ນ ການຄິດໄລ່ໂຕຊີ້ວັດທາງດ້ານການເງິນຕ່າງໆ.

ໃນການສຳມະນາ ບັນດາແຂວງໄດ້ພັດທະນາທິດທາງກາງສະໃໝ ເພື່ອພັດທະນາສະຖານະພາບ ທາງດ້ານການເງິນ ແລະ ເກືອບໝົດທຸກແຂວງ ໄດ້ສະແດງທິດທາງຂອງຕົນດັ່ງລຸ່ມນີ້:

- ຫຼີກລ້ຽງການເພີ່ມຂຶ້ນຂອງ ວົງເງິນເຖິງກຳນົດ (ມູນຄ່າທີ່ຕ້ອງຊຳລະຕາມແຜນ)

- ຫຼຸດຜ່ອນໄລຍະເວລາການຊຳລະ ແລະ

- ໃຊ້ງົບປະມານທີ່ມີຢ່າງຈຳກັດໃຫ້ມີປະສິດຕິຜົນທີ່ສຸດ ຄັດເລືອກເອົາໂຄງການ ບຸລິມະສິດໂດຍຜ່ານການປະເມີນ.

## (4) ຫົວຂໍ້ທີ 4: ການສະເໜີໂຄງການແລະການປະເມີນໂຄງການ

ຫົວຂໍ້ນີ້ອະທິບາຍເຖິງ 2 ອົງປະກອບຄື ການສະເໜີໂຄງການ ແລະ ການປະເມີນໂຄງການ ເຊິ່ງເປັນກຸນແຈສຳຄັນໃນຂັ້ນຕອນສະເໜີ ຂໍງົບປະມານປະຈຳປີ. ໂຄງການອອກແບບຫົວຂໍ້ນີ້ມາເພື່ອໃຫ້ແທດເໝາະກັບຈຸດປະສົງ ແລະ ຜູ້ເຂົ້າຮ່ວມຂອງແຕ່ລະໂປຣແກມຝຶກອົບຮົມ. ໂດຍສະເພາະແມ່ນການສະເໜີໂຄງການແມ່ນ ບັນຈຸຢູ່ໃນໂປຣແກມ TOT ແລະ ການຝຶກອົບຮົມຢູ່ແຂວງ ໃນຄະນະທີ່ການປະເມີນໂຄງການແມ່ນ ບັນຈຸຢູ່ໃນໂປຣແກມ TOT ເທົ່ານັ້ນ. ສ່ວນ TOT ສຳລັບກະຊວງແມ່ນເນັ້ນໃສ່ການປະເມີນໂຄງການ ໂດຍການເຮັດບົດຝຶກຫັດ ກ່ຽວກັບການນຳໃຊ້ໃບປະເມີນໂຄງການແບບກະທັດຮັດ (SPAS). ລາຍລະອຽດກ່ຽວກັບ ແຕ່ລະອົງປະກອບແມ່ນມີດັ່ງຕໍ່ໄປນີ້:

### 1) ການສະເໜີໂຄງການ

ໃນ TOT ກຳນົດເວລາການຍື່ນສະເໜີຂໍງົບປະມານການລົງທຶນລັດ ໄດ້ຖືກແຈ້ງໃຫ້ຮູ້ ແລະ ໄດ້ອະທິບາຍເຖິງ ການເລືອກເອົາແບບຟອມທີ່ເໝາະສົມ ຕາມສະຖານະພາບຂອງໂຄງການ ແລະ ຍັງໄດ້ອະທິບາຍເຖິງ ບັນດາເອກະສານຄັດຕິດທີ່ຈຳເປັນ ອົງຕາມປະເພດໂຄງການ ທີ່ສະເໜີ ພະນັກງານ ພຜທ ກາຍເປັນຜູ້ທີ່ມີຄວາມສາມາດ ອະທິບາຍເນື້ອໃນຕ່າງໆໃນການສະເໜີໂຄງການ ໃຫ້ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງໃນແຂວງຂອງຕົນໄດ້.

ໂດຍລວມແລ້ວ ລະດັບຄວາມເຂົ້າໃຈໃນອີງປະກອບນີ້ ແມ່ນສູງ ຜູ້ເຂົ້າຮ່ວມເຂົ້າໃຈເຖິງຄວາມສຳຄັນຂອງການ ຍື່ນບົດລາຍງານຄວາມຄືບໜ້າ ເພື່ອຂໍງົບປະມານສຳລັບໂຄງການສືບຕໍ່ ເຊິ່ງແມ່ນຈຸດສຳຄັນອັນໜຶ່ງໃນຫົວຂໍ້ນີ້. ໃນລະຫວ່າງຝຶກອົບຮົມໄດ້ພົບຂໍ້ຜິດພາດໃນການຈັດພິມຢູ່ໃນບາງແບບຟອມ ເຖິງແມ່ນວ່າຈະນຳໃຊ້ ແລະ ການປັບປຸງແບບຟອມ[8] ດັ່ງກ່າວຈະເປັນສິ່ງຈຳເປັນເພື່ອໃຫ້ສະດວກຕໍ່ຜູ້ນຳໃຊ້ ຈຳນວນຄັ້ງໃນການປັບບໍ່ຄວນເຮັດຖີ່ເກີນໄປ ແລະ ຄວນປັບປຸງທຸກໆ ແບບຟອມທີ່ມີຈຸດຜິດພາດໃນເວລາດຽວກັນ ເພື່ອໃຫ້ຜູ້ນຳໃຊ້ ໄດ້ໃຊ້ແບບຟອມທີ່ຖືກປັບປຸງຫຼ້າສຸດ.

ໂຄງການໄດ້ຖືໂອກາດ ບອກໃຫ້ບັນດາອົງການຈັດຕັ້ງເປົ້າໝາຍຮັບຮູ້ ກ່ຽວກັບແບບຟອມທີ່ຖືກປັບປຸງຫຼ້າສຸດໃນເວລາຝຶກອົບຮົມເພື່ອສ້າງຄູຝຶກ TOT.

ການຝຶກອົບຮົມຢູ່ແຂວງ ວົງຈອນຂອງການຍື່ນສະເໜີຂໍງົບປະມານປະຈຳປີ ພ້ອມກັບການເລືອກແບບຟອມສະເໜີໂຄງການທີ່ແທດເໝາະໄດ້ຖືກອະທິບາຍ ໃນເວລາເຮັດບົດຝຶກຫັດໄດ້ໃຫ້ບັນດາຜູ້ເຂົ້າຮ່ວມທົດລອງຕື່ມແບບຟອມ ບົດລາຍງານຄວາມຄືບໜ້າສຳລັບ ໂຄງການສືບຕໍ່ສຳລະ. ສຳລັບແບບຟອມຊຳລະໂຄງການເບິ່ງຄືຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບການນຳໃຊ້ແບບຟອມດັ່ງກ່າວທຽບໃສ່ການຝຶກອົບຮົມທີ່ຜ່ານມາ ແລະແບບຟອມໄດ້ຮັບການປັບປຸງໂດຍອີງຕາມຄຳຄິດເຫັນຂອງຜູ້ເຂົ້າຮ່ວມຝຶກອົບຮົມໃນປີຜ່ານມາ.

**2) ການປະເມີນໂຄງການ.**

ອີງປະກອບນີ້ ໂດຍລວມແລ້ວ ຜູ້ເຂົ້າຮ່ວມແມ່ນເຂົ້າໃຈດີເນື່ອງຈາກ ການປະເມີນໂຄງການແມ່ນໄດ້ຖືກນຳເຂົ້າໃນຫຼັກສູດຝຶກອົບຮົມຫຼາຍຄັ້ງແລ້ວ. ການປະເມີນຜົນຂອງ ການປະເມີນ (Meta-evolution) ແມ່ນມີຈຸດປະສົງ ເພື່ອປະເມີນບົດລາຍງານການປະເມີນ ແລະ ການດຳເນີນການປະເມີນ ເພື່ອຮັບປະກັນວ່າການປະເມີນແມ່ນຖືກຕ້ອງ. ໃນເບື້ອງຕົ້ນ ມັນເປັນການຍາກສຳລັບຜູ້ເຂົ້າຮ່ວມໃນ ການເຂົ້າໃຈເຖິງແນວຄວາມຄິດດັ່ງກ່າວ ເພາະວິທີການຂ້ອນຂ້າງຈະສະຫຼັບຊັບຊ້ອນ ແລະ ການອະທິບາຍຂອງຄູຝຶກຍັງບໍ່ກະຈ່າງແຈ້ງເທົ່າທີ່ຄວນ. ແຕ່ແນວໃດກໍ່ຕາມ ອີງຕາມຜົນຂອງການປະເມີນພະນັກງານ ພຜທ ຈາກແຂວງ ແລະ ນະຄອນຫຼວງ ໄດ້ຖອດຖອນບົດຮຽນຈາກການຝຶກອົບຮົມຄັ້ງນີ້ ແລະ ຈະເຮັດໃຫ້ການປະເມີນໂຄງການ ມີປະສິດທິຜົນ ຂຶ້ນສົກງົບປະມານທີ່ຈະມາເຖິງນີ້ (ເບິ່ງຕາມບົດຮຽນຕົວຢ່າງທີ່ຈະຖອດຖອນໄດ້ຢູ່ຕາຕະລາງລຸ່ມນີ້)

ແຜນປະຕິບັດການປະເມີນໂຄງການໃນປີໜ້າໂດຍຜູ້ເຂົ້າຮ່ວມ(ໂຕຢ່າງ)

---

[8] ຂໍ້ຜິດພາດໃນການຈັດພິມທີ່ພົບແມ່ນແບບຟອມ I-4, I-6, II-1, II-3, II-6, II-7. ບັນດາແບບຟອມທີ່ຖືກດັດແກ້ໄດ້ຖືກຈັດສົ່ງໃຫ້ບັນດາອົງການຈັດຕັ້ງທີ່ຫຼັງໆຈາກຝຶກອົບຮົມ.

| ຈຸດແຂງ ແລະ ຈຸດອ່ອນຂອງການປະເມີນໃນປີນີ້ (ອີງຕາມຜົນຂອງການປະເມີນຜົນຂອງການປະເມີນ) | | ແຜນປະຕິບັດການປະເມີນໂຄງການສຳລັບປີໜ້າ |
|---|---|---|
| ຈຸດແຂງ | ຈຸດອ່ອນ | |
| - ໂດຍລວມຜູ້ປະເມີນເຂົ້າໃຈວິທີການປະເມີນ.<br>- ຜູ້ປະເມີນໄດ້ປະເມີນຢ່າງເໝາະສົມໂດຍສຶກສາເອກະສານໂຄງການຢ່າງລະອຽດ.<br>- ຜູ້ປະເມີນສຳເລັດການປະເມີນຕາມກຳນົດເວລາ.<br>- ຜູ້ປະເມີນໄດ້ໃຫ້ຄຳເຫັນແນະ ນຳກ່ຽວກັບຜົນຂອງການປະເມີນຕໍ່ກັບເຈົ້າຂອງໂຄງການ. | - ບາງກໍລະນີ ການໃຫ້ຄະແນນບໍ່ແທດເໝາະກັບມາດຕະຖານການໃຫ້ຄະແນນ.<br>- ໃນບາງກໍລະນີ ການໃຫ້ຄຳຄິດເຫັນຂອງນັກປະເມີນຍັງກ່ຽວກັບຜົນຂອງການປະເມີນຍັງບໍ່ຖືກຕາມໂລຊິກ.<br>- ບາງກໍລະນີ ຜູ້ປະເມີນໂຄງການໂດຍບໍ່ໄດ້ສຶກສາບົດໂຄງການລະອຽດ. | - ພຜທ ຈະໄດ້ຈັດຝຶກອົບຮົມກ່ຽວກັບການປະເມີນໂຄງການໃຫ້ແກ່ພະນັກງານຈາກບັນດາພະແນກການແລະພະນັກງານຂອງ ພຜທ ເອງ.<br>- ພຜທ ຈະປະສານສົມທົບແລະປຶກສາຫາລືກັບເຈົ້າຂອງໂຄງການເພື່ອໃຫ້ເຂົ້າໃຈເລິກເຊິ່ງກ່ຽວກັບເນື້ອໃນແລະຄວາມສຳຄັນຂອງໂຄງການທີ່ຕົນເອງປະເມີນ.<br>- ພຜທ ຈະສຶກສາຕື່ມກ່ຽວກັບວິທີການປະເມີນໂດຍສະເພາະແມ່ນມາດຖານການໃຫ້ຄະແນນ. |

3. ການປະເມີນໂຄງການໄດ້ໃຊ້ ສປາດສ (SPAS)

ສຳລັບການຝຶກອົບຮົມຢູ່ຂັ້ນກະຊວງ ແລະ ອີງການຈັດຕັ້ງສູນກາງ ການປະເມີນໂຄງການ ແລະການນຳໃຊ້ (SPAS) ຍັງບໍ່ທັນແຜ່ຫຼາຍ ຫຼືຍັງບໍ່ທັນເປັນເອກະພາບກັນ. ດັ່ງນັ້ນ ຈຸດສຳຄັນຂອງການປະເມີນໂຄງການໂດຍນຳໃຊ້ແຜ່ນ (SPAS) ໄດ້ຖືກບັນຍາຍພ້ອມກັບເຮັດບົດຝຶກຫັດໃນລະຫວ່າງ TOT ຢູ່ຂັ້ນກະຊວງ. ອີງຕາມຜົນຂອງການປະເມີນຂອງຜູ້ເຂົ້າຮ່ວມ ໄດ້ສະແດງໃຫ້ເຫັນວ່າ ໂດຍລວມແລ້ວ, ລະດັບຄວາມເຂົ້າໃຈຂອງ 5 ມາດຖານການປະເມີນແມ່ນສູງ. ບັນດາການນຳກໍ່ຈຳເປັນຕ້ອງໄດ້ເຂົ້າໃຈເຖິງ ຄວາມສຳຄັນຂອງການປະເມີນເຊັ່ນດຽວກັນ ແລະຈະເປັນຜູ້ສະໜັບສະໜູນຊຸກຍູ້ ໃຫ້ມີການປະເມີນໂຄງການໃນຂົງເຂດວຽກງານຂອງຕົນເອງ ເພື່ອການລົງທຶນທີ່ມີປະສິດຕິພາບ ແລະ ປະສິດຕິຜົນ.

**(5) ການຄຸ້ມຄອງທຶນສົມທົບກັບທຶນ ODA**

ເນື່ອງຈາກຫົວຂໍ້ນີ້ເປັນຫົວຂໍ້ທີ່ໃໝ່ ມີຫຼາຍຄຳຖາມຖືກຖາມຂຶ້ນກ່ຽວກັບ ວິງຈອນຂອງການຂໍງົບປະມານທຶນສົມທົບ ແລະ ວິທີການຕື່ມແບບຟອມ ສປິດສ(SPIS) ຜູ້ບັນຍາຍສາມາດຕອບຄຳຖາມຕ່າງໆໄດ້ ເຊິ່ງຊ່ວຍໃຫ້ ຜູ້ເຂົ້າຮ່ວມເຂົ້າໃຈແຈ້ງຂຶ້ນຕື່ມ.

ເນື້ອໃນຂອງບົດບັນຍາຍແມ່ນໄດ້ອະທິບາຍລະອຽດ ແລະສາມາດເຂົ້າໃຈງ່າຍ ດັ່ງນັ້ນ ເນື້ອໃນດັ່ງກ່າວສາມາດໃຊ້ເຂົ້າໃນການຝຶກອົບຮົມຄັ້ງຕໍ່ໄປ ແລະ ສາມາດໃຊ້ເປັນບ່ອນອີງໄດ້. ແຕ່ຜູ້ເຂົ້າຮ່ວມຍັງສັບສົນກ່ຽວກັບແບບຟອມ SPIS ສາມາດໃຊ້ກັບກໍລະນີຂອງແຕ່ລະອົງການຈັດຕັ້ງໄດ້ຫຼືບໍ່ ເພາະໂຄງການມີຫຼາຍປະເພດ ມັນເປັນສິ່ງຈຳເປັນຕ້ອງໄດ້ສະແດງແຜນວາດ ແລະ ຄຳແນະນຳ ຕ່າງໆລົງໃນປຶ້ມຄູ່ມື ເພື່ອເຮັດໃຫ້ຜູ້ນຳໃຊ້ ເຂົ້າໃຈເຖິງການໃຊ້ແບບຟອມດັ່ງກ່າວ ເຂົ້າໃນແຕ່ລະກໍລະນີ ອີງຕາມສະຖານະພາບຂອງໂຄງການ ແລະ ອື່ນໆ.

**(6) ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ**

ຫົວຂໍ້ນີ້ ກໍ່ເປັນຫົວຂໍ້ໃໝ່ເຊັ່ນດຽວກັນ ແລະ ກໍ່ມີຫຼາຍຄຳຖາມກ່ຽວກັບຫົວຂໍ້ດັ່ງກ່າວ ຜູ້ບັນຍາຍໄດ້ອະທິບາຍບັນດາຊ່ອງທາງທີ່ຂັ້ນເມືອງສາມາດສະເໜີຂໍງົບປະມານ. ຜູ້ເຂົ້າຮ່ວມຫຼາຍທ່ານບໍ່ເຂົ້າໃຈຄວາມແຕກຕ່າງລະຫວ່າງ ການພັດທະນາກຸ່ມບ້ານ[9] ແລະການພັດທະນາເມືອງ. ເນື່ອງຈາກລັດຖະບານຍັງກຳລັງສຶກສາທິດທາງ ສຳລັບການພັດທະນາເມືອງ ໃນອະນາຄົດ ໂດຍຜ່ານການວັດແທກການຫຼຸດລົງຂອງຄວາມທຸກຍາກ ແລະ ການພັດທະນາຊົນນະບົດ ແລະ ການສະເໜີຂໍງົບປະມານຈາກຂັ້ນເມືອງ ແມ່ນຕ້ອງສອດຄ່ອງກັບນະໂຍບາຍດັ່ງກ່າວ.

**(7) ແຜນງານ ແລະ ການປະເມີນແບບປຽບທຽບ**

ຈຸດປະສົງຂອງຫົວຂໍ້ນີ້ແມ່ນ ເຊື່ອມໂຍງລະຫວ່າງການປະເມີນແບບປຽບທຽບກັບ ແຜນພັດທະນາເສດຖະກິດຂອງຂະແໜງການ ພາຍໃຕ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2011- 15. ເຄືອຈຸດປະສົງແຜນງານ (POT) ແມ່ນເຄື່ອງມືອັນໜຶ່ງ ຖືກພັດທະນາຂຶ້ນ ໂດຍໂຄງການ ແລະ ເຄື່ອງມືດັ່ງກ່າວນີ້ຖືກນຳໃຊ້ ເພື່ອຊອກຫາມາດຖານສຳລັບ ການຄັດເລືອກໂຄງການໃນຂັ້ນ ຕອນການປະເມີນແບບປຽບທຽບ ຜູ້ເຂົ້າຮ່ວມຫຼາຍຄົນຄຸ້ນ ເຄີຍກັບການປະເມີນແບບປຽບທຽບ ແລະ ເຄືອຈຸດປະສົງແຜນງານຈາກການຝຶກອົບຮົມຄັ້ງກ່ອນ ດັ່ງນັ້ນ, ການທີ່ເຊື່ອມໂຍງລະຫວ່າງ 2 ເຄື່ອງມືດັ່ງກ່າວ ເຂົ້າໃນການເຮັດບົດສຳລັບການຝຶກອົບຮົມຄັ້ງນີ້ ແມ່ນໄດ້ດຳເນີນໄປຢ່າງລາບລື້ນດີ.

---

[9] ກຸ່ມບ້ານ: ແມ່ນເປັນການລວມກຸ່ມຂອງຫຼາຍບ້ານ ແລະເປັນເຂດຈຸດສຸມຂອງການພັດທະນາ ລວມທັງໝົດໃນທົ່ວປະເທດມີ 213 ກຸ່ມບ້ານ ແລະຄາດວ່າຈຳນວນກຸ່ມບ້ານຈະເພີ້ມຂຶ້ນຕື່ມ.

ສິ່ງທີ່ຕ້ອງໄດ້ພິຈາລະນາຕື່ມອີກຄື ໂຄງການປະເພດ 1 ແລະ 2 ເຊິ່ງເປັນໜ້າທີ່ຂອງກະຊວງ ຜທ ໃນການປະເມີນແບບຂາດໂຕ ແຕ່ການປະເມີນແບບປຽບທຽບ ຄວນຈະຖືກປະເມີນຮ່ວມກັບ ໂຄງ ການປະເພດ 3 ໃນ ພຜທ ຂອງແຕ່ລະແຂວງ ຫຼືບໍ່ຍັງຕ້ອງໄດ້ພິຈາລະນາຕື່ມ.

## *3. ຜົນສຳເລັດຂອງໝາກຜົນທີ່ຄາດໄວ້*

### *3.1 [ໝາກຜົນທີ 1] ການຝຶກອົບຮົມ ແລະ ການລົງຕິດຕາມໜ້າວຽກ*

| |
|---|
| 3.1 [ໝາກຜົນທີ 1]<br>ພະນັກງານ ພຜທ ຂອງທຸກໆແຂວງ ແລະກົມ/ພະແນກແຜນການກະຊວງ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ໄດ້ຄວາມຮູ້ ແລະ ທັກສະພື້ນຖານກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດ |
| [ໂຕຊີ້ວັດ]<br>1) ພະນັກງານ ພຜທ ຫຼາຍກ່ວາ 5 ທ່ານໃນແຕ່ລະແຂວງສາມາດຄຸ້ມຄອງໂຄງການລົງທຶນລັດໃຫ້ສອດຄ່ອງກັບປື້ມຄູ່ມືຕ່າງໆ.<br>2) ພະນັກງານກົມ/ພະແນກ ແຜນການຫຼາຍກ່ວາ 5 ທ່ານໃນແຕ່ລະກະຊວງ ຫຼື ອົງການຈັດຕັ້ງອື່ນໆສາມາດຄຸ້ມຄອງໂຄງການລົງທຶນລັດໃຫ້ສອດຄ່ອງກັບປື້ມຄູ່ມືຕ່າງໆ. |

ບັນດາກິດຈະກຳທີ່ກ່ຽວພັນເຖິງໝາກຜົນທີ 1 ໄດ້ດຳເນີນໄປຢ່າງເປັນເປັນປົກກະຕິ ຈົນເຖິງປະຈຸບັນ ແລະ ຄາດວ່າຈະບັນລຸຜົນກ່ອນໂຄງການຈະສິ້ນສຸດ. ໃນປີນີ້, ບັນດາຫົວໜ້າພະແນກ, ຮອງພະແນກ, ຫົວໜ້າຂະແໜງ, ຮອງຂະແໜງ ແລະ ພະນັກງານວິຊາການລວມທັງໝົດ 66 ທ່ານ ຈາກ ພຜທ 16 ແຂວງ ແລະ ນະຄອນຫຼວງໄດ້ສຳເລັດ" ສຳມະນາກ່ຽວກັບການດຳເນີນການລົງທຶນລັດ ແລະ ການຄຸ້ມຄອງທາງດ້ານການເງິນ" ຫຼັງຈາກສຳເລັດສຳມະນາ ພະນັກງານ ພຜທ ຈຳນວນ 103 ທ່ານຈາກ 16 ແຂວງ ແລະ ນະຄອນຫຼວງ ແລະ ພະນັກງານ ຈຳນວນ 35 ທ່ານ ຈາກ ກົມ/ພະແນກແຜນການຂອງ 8 ກະຊວງໄດ້ສຳເລັດ "ການຝຶກອົບຮົມກ່ຽວກັບການຄຸ້ມຄອງກ່ຽວກັບການ ລົງທຶນສຳລັບພະນັກງານ ພຜທ ແຂວງແລະກົມ/ພະແນກການກະຊວງ (TOT: ການຝຶກອົບຮົມເພື່ອສ້າງຄູຝຶກ) ນີ້ເປັນຄັ້ງທຳອິດຂອງໂຄງການທີ່ເຮັດໃຫ້ພະນັກງານ ພຜທ ຈຳນວນ 102 ໃນ 16 ແຂວງ ແລະ ນະຄອນຫຼວງ ມີຄວາມໝັ້ນໃຈທີ່ຈະອະທິບາຍ ແຕ່ລະວິທີການຄຸ້ມຄອງການລົງທຶນລັດ ໃຫ້ແກ່ຜູ້ເຂົ້າຮ່ວມຝຶກອົບຮົມ ຫຼື ເຈົ້າຂອງໂຄງການ ຈຳນວນທັງໝົດໃນທົ່ວປະເທດ 811 ທ່ານ ໂດຍຜ່ານການຝຶກອົບຮົມ "ການຄຸ້ມຄອງການລົງທຶນລັດສຳລັບເຈົ້າຂອງໂຄງການຂັ້ນແຂວງ" ສິ່ງດັ່ງກ່າວນີ້ ແມ່ນບາດກ້າວອັນດີ ສຳລັບ ພຜທ ໃນການມີບົດບາດເປັນສູນກາງ ໃນການຄຸ້ມຄອງການລົງທຶນລັດໃນແຂວງຂອງຕົນເອງ. ເພື່ອບັນລຸ

ໝາກຜົນທີ 1 ຢ່າງເຕັມເມັດເຕັມໜ່ວຍ ໂຄງການຈະສືບຕໍ່ລົງຕິດຕາມໜ້າວຽກ (OJT) ໃນເດືອນ ກຸມພາ ແລະ ເດືອນມີນາ 2011 ນີ້ ເພື່ອສະໜັບສະໜູນຊຸກຍູ້ ພຜທ ແຂວງ ແລະ ກົມ/ພະແນກແຜນການກະຊວງ ແລະ ເຈົ້າຂອງໂຄງການ ໃນການໃຊ້ຄວາມຮູ້ ແລະ ວິທີການໄດ້ຈາກການຝຶກອົບຮົມເຂົ້າໃນວຽກງານການຄຸ້ມຄອງການລົງທຶນລັດໂຕຈິງຂອງເຂົາເຈົ້າ.

## *3.2 [ໝາກຜົນທີ 2] ການຄຸ້ມຄອງງົບປະມານແລະການຄຸ້ມຄອງການເງິນ*

| |
|---|
| [ໝາກຜົນທີ 2]<br>ລະບຽບວິໃນຕ່າງໆແມ່ນໄດ້ຖືກນຳສະເໜີ ແລະອະນຸມັດການນຳໃຊ້ຢ່າງເປັນທາງການໃນການຄຸ້ມຄອງການລົງທຶນລັດ |
| [ໂຕຊີ້ວັດ]<br>1) ປື້ມຄູ່ມືການຄຸ້ມຄອງໂຄງການ ແລະ ບັນດາປື້ມຄູ່ມືສະເພາະແມ່ນ ໄດ້ຖືກຍົກລະດັບ ແລະ ພັດທະນາ ເພື່ອກວມເອົາເນື້ອໃນການວາງແຜນ ແລະ ການຄຸ້ມຄອງງົບປະມານ. ປື້ມຄູ່ມືການຄຸ້ມຄອງ ແຜນງານແລະໂຄງການ ແລະ ບັນດາປື້ມຄູ່ມືສະເພາະໄດ້ຖືກອະນຸມັດນຳໃຊ້ ແລະ ຖືກຢາຍໃຫ້ທຸກໆອົງການລັດຖະບານທີ່ກ່ຽວຂ້ອງ<br>2) ພະນັກງານກະຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະ ພະນັກງານແຜນການຫຼາຍກ່ວາ 5 ທ່ານຢູ່ແຕ່ລະແຂວງ ກະຊວງ ແລະ ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງສາມາດຄຸ້ມຄອງໂຄງການລົງທຶນລັດ ໃຫ້ສອດຄ່ອງກັບບັນດາປື້ມຄູ່ມືຕ່າງໆ ທີ່ໄດ້ຖືກພັດທະນາ ແລະ ຍົກລະດັບ ແລະ ສາມາດຝຶກຕໍ່ໃຫ້ບັນດາພະນັກງານຂັ້ນແຂວງ ແລະ ຂັ້ນເມືອງທີ່ກ່ຽວຂ້ອງ.<br>3) ກະຊວງ ຜທ ແລະ ພຜທ ພັດທະນາ ແລະ ດຳເນີນຄາດຄະເນງົບປະມານ, ຈຳກັດມູນຄ່າໂຄງການລົງທຶນພາຍໃນ ແລະ ມູນຄ່າທຶນສົມທົບຕາມເພດານງົບປະມານປະຈຳປີ ແລະ ການວາງແຜນ ງົບປະມານຕາມຕາຕະລາງ ອີງຕາມຄາດຄະເນ ແລະ ເພດານ. |

ກິດຈະການທີ່ກ່ຽວພັນເຖິງໝາກຜົນທີ 2 ແມ່ນໄດ້ຖືກດຳເນີນໄປຢ່າງເປັນປົກກະຕິ ແລະ ປະຈຸບັນນີ້ພະນັກງານ ພຜທ ແຂວງໄດ້ເຂົ້າໃຈວິທີການນຳໃຊ້ເຄື່ອງມື ການຄຸ້ມຄອງທາງດ້ານການເງິນ. ແຕ່ກໍ່ບໍ່ໄດ້ໝາຍຄວາມວ່າ ບັນດາແຂວງຕ້ອງນຳໃຊ້ເຄື່ອງມືດັ່ງກ່າວ ສຳລັບການດຳເນີນການສ້າງແຜນງົບປະມານການລົງທຶນລັດສຳລັບສົກປີ 2011-12 ນີ້ ແລະ ປັບປຸງສະຖານະພາບທາງການເງິນ ຂອງເຂົາເຈົ້າ ເພາະວ່າການນຳໃຊ້ເຄື່ອງມືການຄຸ້ມຄອງການເງິນ ໃນການສ້າງແຜນງົບປະມານ ຍັງບໍ່ໄດ້ຖືກນຳໃຊ້ຢ່າງເປັນທາງການ ຫຼື ຍັງບໍ່ທັນໄດ້ມີຄຳແນະນຳ ຈາກກະຊວງ ຜທ ເຖິງບັນດາແຂວງໃຫ້ນຳໃຊ້ເຄື່ອງມືດັ່ງກ່າວ. ໝາກຜົນທີ່ 2 ຈະບັນລຸເປົ້າໝາຍ ຫຼື ບໍ່ແມ່ນຂຶ້ນຢູ່ກັບການອະນຸມັດນຳໃຊ້ເຄື່ອງມືດັ່ງກ່າວຢ່າງເປັນທາງການ ໂດຍການລວມເອົາຫົວຂໍ້

ການຄຸ້ມຄອງທາງດ້ານການເງິນ ເຂົ້າໃນດຳລັດຂອງນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າ ດ້ວຍການລົງທຶນລັດ. ໃນສຳມະນາ ພະນັກງານຈາກບາງແຂວງ ກັງວົນກ່ຽວກັບການຄຸ້ມຄອງງົບປະມານສຳລັບໂຄງການສະເໜີໃໝ່ ແລະ ພວກເຂົາເວົ້າວ່າ ແຂວງອາດບໍ່ສາມາດບັນລຸເປົ້າໝາຍການພັດທະນາ ຖ້າຫາກຈຳກັດການລົງທຶນໃສ່ບັນດາ ໂຄງການດັ່ງກ່າວ. ດ້ວຍເຫດນີ້ການລົງທຶນໃສ່ບັນດາໂຄງການໃໝ່ ຈຶ່ງຂ້ອນຂ້າງສູງ ການນຳໃຊ້ເຄື່ອງມືການຄຸ້ມຄອງທາງດ້ານການເງິນ ແລະ ການຈຳກັດການລົງທຶນໃສ່ໂຄງການໃໝ່ ຈຳເປັນຕ້ອງມີບົດແນະນຳທີ່ເໝາະສົມ ຈາກກະຊວງ ຜທ ໄປເຖິງບັນດາແຂວງໃນການສ້າງງົບປະມານ.

ເມື່ອບົດແນະນຳຈາກກະຊວງ ຜທ ຖືກສົ່ງໄປບັນດາແຂວງ ຄາດວ່າ ພຜທ ແຂວງ ແລະ ກົມ ທີ່ກ່ຽວຂ້ອງໃນກະຊວງ ຜທ ຈະເລີ່ມນຳໃຊ້ເຄື່ອງມືການຄຸ້ມຄອງການເງິນຢ່າງເປັນທາງການ ເພື່ອປັບປຸງສະຖານະພາບທາງການເງິນຂອງເຂົາເຈົ້າ (ໂຕຢ່າງ: ເພື່ອຫຼີກລ້ຽງການເພີ່ມຂຶ້ນຂອງ ວົງເງິນເຖິງກຳນົດ (ມູນຄ່າທີ່ຈະຕ້ອງໄດ້ສຳລະຕາມແຜນ) ແລະການແກ່ຍາວໄລຍະການຊຳລະ.)

## *3.3 [ໝາກຜົນທີ 3] ການໃຫ້ຄຳປຶກສາກ່ຽວກັບກົດໝາຍວ່າດ້ວຍການລົງທຶນ*

| |
|---|
| [ໝາກຜົນທີ 3]<br><br>ກອບກົດໝາຍກ່ຽວກັບການຄຸ້ມຄອງການລົງທຶນລັດຢ່າງມີປະສິດຕິພາບ ແລະປະຕິຜົນແມ່ນໄດ້ຖືກພັດທະນາແລະເຮັດໃຫ້ແຂວງແກ່ນຂຶ້ນ. |
| [ໂຕຊີ້ວັດ]<br><br>1) ກົດໝາຍການຄຸ້ມຄອງການລົງທຶນລັດແລະບັນດາດຳລັດທີ່ກ່ຽວຂ້ອງໄດ້ຖືກຮ່າງຂຶ້ນ ແລະໄດ້ຮັບອະນຸມັດຈາກສະພາ.<br><br>2) ກົດໝາຍການຄຸ້ມຄອງການລົງທຶນລັດແລະບັນດາດຳລັດທີ່ກ່ຽວຂ້ອງໄດ້ລະບຸເຖິງອົງການຈັດຕັ້ງທີ່ຮັບຜິດຊອບ ແລະຂັ້ນຕອນທາງດ້ານກົດໝາຍສຳລັບການທວນຄືນ, ການປ່ຽນແປງ, ການຢຸດຊົ່ວຄາວ ແລະ ການສືບຕໍ່ໂຄງ ການລົງທຶນລັດ ລວມທັງໂຄງການ ODA ທີ່ມີທຶນສົມທົບ ແລະ ການປະຕິບັດລະບຽບຕໍ່ອົງການກ່ຽວຂ້ອງ ແລະ ຜູ້ຮັບເໝົາທີ່ລ່ວງລະເມີດ.<br><br>3) ກົດໝາຍການຄຸ້ມຄອງການລົງທຶນລັດ ແລະ ດຳລັດທີ່ກ່ຽວຂ້ອງເຮັດໃຫ້ບັນດາຄູ່ມືກຕ່າງໆ ທີ່ຖືກພັດທະນາໂດຍໂຄງການ ກາຍເປັນເຄື່ອງມືມາດຕະຖານການຄຸ້ມຄອງການລົງທຶນລັດ ແລະໄດ້ຖືກເຜີຍແຜ່ໄປທົ່ວປະເທດ. |

ໝາກຜົນຂ້າງເທິງນີ້ຄາດວ່າຈະສາມາດບັນລຸກ່ອນໂຄງການສິ້ນສຸດ ກົດໝາຍວ່າດ້ວຍການລົງທຶນລັດແມ່ນ ຖືກອະນຸມັດໂດຍສະພາແຫ່ງຊາດໃນເດືອນພະຈິກ 2009 ແລະ ມີຜົນສັກສິດໃນ

ເດືອນທັນວາ 2009 ປຶ້ມກົດໝາຍວ່າດ້ວຍການລົງທຶນລັດ ໄດ້ຖືກຈັດພິມ ແລະ ແຈກຢາຍໃຫ້ບັນດາຜູ້ເຂົ້າຮ່ວມສຳມະນາ ແລະ ຝຶກອົບຮົມ.

ດຳລັດການຈັດຕັ້ງປະຕິບັດກົດໝາຍ ຂອງນາຍົກລັດຖະມົນຕີແມ່ນ ກຳລັງຢູ່ໃນຂັ້ນຕອນການດຳ ເນີນງານ ແລະ ຄາດວ່າຈະຳດ້ຖືກອະນຸມັດໃນເດືອນ ພຶດສະພາ 2011ນີ້. ໂຄງການຈະໄດ້ປຶກສາ ຫາລືກັບຄະນະຮັບຜິດຊອບຢູ່ທີ່ກະຊວງ ຜທ ຕື່ມອີກ ເພື່ອໃຫ້ສອດຄ່ອງກັບປຶ້ມຄູ່ມືຕ່າງໆ.

## *3.4 [ໝາກຜົນທີ 4] ກິດຈະກຳສຳລັບການປັບປຸງວິທີການຄຸ້ມຄອງການລົງທຶນລັດ*

| |
|---|
| [ໝາກຜົນທີ 4]<br><br>ພະນັກງານກະຊວງ ຜທ, ພຜທ ຂອງທຸກແຂວງ ແລະກົມ/ພະແນກແຜນການຂອງບັນດາກະຊວງ ໄດ້ຍົກລະດັບຄວາມຮູ້ ແລະ ທັກສະກ່ຽວກັບການຄຸ້ມຄອງທຶນສົມທົບ ODA, ໂຄງການລົງທຶນລັດຂັ້ນເມືອງ ແລະ ການຄຸ້ມຄອງແຜນງານ. |
| [ໂຕຊີ້ວັດ]<br><br>1) ປຶ້ມຄູ່ມືການຄຸ້ມຄອງໂຄງການ ແລະ ບັນດາປຶ້ມຄູ່ມືສະເພາະຕ່າງໆ ໄດ້ຖືກຍົກລະດັບ ແລະ ພັດທະນາ ເຊິ່ງໄດ້ກວມເອົາການຄຸ້ມຄອງທຶນສົມທົບກັບ ODA ແລະ ການຄຸ້ມຄອງໂຄງການລົງທຶນຂັ້ນເມືອງ ບັນດາປຶ້ມຄູ່ມືດັ່ງກ່າວໄດ້ຖືກອະນຸມັດ ແລະ ແຈກຢາຍໄປທຸກ ອົງການຈັດຕັ້ງທີ່ກ່ຽວຂ້ອງ.<br><br>2) ຄູ່ມືການຄຸ້ມຄອງແຜນງານ ໄດ້ຮັບການປັບປຸງ, ຖືກອະນຸມັດ ແລະ ການແຈກຢາຍໄປທຸກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ກັບການຄຸ້ມຄອງການລົງທຶນລັດ.<br><br>3) ພະນັກງານກະຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະ ພະນັກງານແຜນການຫຼາຍກ່ວາ 5 ທ່ານຢູ່ແຕ່ລະແຂວງ ກະຊວງແລະອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງສາມາດຄຸ້ມຄອງໂຄງການລົງທຶນລັດ ໃຫ້ສອດຄ່ອງກັບບັນດາປຶ້ມຄູ່ມືຕ່າງໆທີ່ໄດ້ຖືກພັດທະນາ ແລະ ຍົກລະດັບ ແລະ ສາມາດຝຶກຕໍ່ໃຫ້ບັນດາພະນັກງານຂັ້ນແຂວງ ແລະ ຂັ້ນເມືອງທີ່ກ່ຽວຂ້ອງ. |

ການຄຸ້ມຄອງທຶນສົມທົບ ODA, ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ, ແລະ ການຄຸ້ມຄອງແຜນງານ ທັງ 3 ອົງປະກອບດັ່ງກ່າວນີ້ ຖືກພັດທະນາ ແລະ ສ້າງຂຶ້ນ ເພື່ອໃຫ້ບັນລຸໝາກຜົນທີ 4. ການພັດທະນາ 3 ອົງປະກອບດັ່ງກ່າວ ແມ່ນໄດ້ສຳເລັດແລ້ວ ແລະໄດ້ຖືກນຳສະເໜີໃນໂປຣແກມການຝຶກອົບຮົມຢ່າງປະສົບຜົນສຳເລັດ. ໂຄງການຈະໄດ້ສືບຕໍ່ຕິດຕາມຜົນຂອງການສ້າງງົບປະມານການລົງທຶນລັດປະຈຳປີ 2011-12 ແລະ ຕິດຕາມເບິ່ງວິທີການ ແລະ

ເຄື່ອງມື ເພື່ອນຳມາປັບປຸງໃນປື້ມຄູ່ມືສະບັບສຸດທ້າຍ ເຊິ່ງຖືກອອກແບບມາ ເພື່ອອົງການຈັດຕັ້ງທີ່ ພົວພັນເຖິງ ການຄຸ້ມຄອງໂຄງການລົງທຶນລັດ.

### (1) [ໝາກຜົນທີ 4-1] ການຄຸ້ມຄອງທຶນສົມທົບ ODA

<u>ຕາຕະລາງສະແດງຜົນສຳເລັດຂອງໝາກຜົນທີ 4-1</u>

<table>
<tr><th>ໂຕຊີ້ວັດ</th><th>ຜົນສຳເລັດ</th></tr>
<tr><td>4-1 ປື້ມຄູ່ມືການຄຸ້ມຄອງໂຄງການ ແລະ ປື້ມຄູ່ມືສະເພາະ ແມ່ນໄດ້ຖືກພັດທະນາ ໃຫ້ກວມເອົາເນື້ອໃນກ່ຽວກັບ ການຄຸ້ມຄອງທຶນສົມທົບກັບ ໂຄງການ ODA. ບັນດາປື້ມຄູ່ມືດັ່ງກ່າວ ຖືກອະນຸມັດ ແລະ ແຈກຢາຍໃຫ້ທຸກອົບການ ຈັດຕັ້ງລັດທີ່ກ່ຽວຂ້ອງ.</td><td>ວົງຈອນຂອງການຂໍທຶນສົມທົບ (ODA-NCB) ແບບຟອມ ສະປິດສ (SPIS) ແລະ ວົງຈອນຂອງການຈັດກອງປະຊຸມ ປະເມີນແບບປຽບທຽບ ເປັນສິ່ງສະທ້ອນ ໃຫ້ເກັບການພັດທະນາ ການຄຸ້ມຄອງທຶນສົມທົບກັບໂຄງການ ODA ແລະສະເໜີຕໍ່ກົມຮ່ວມມືສາກົນ ກະຊວງ ຜທ.<br><br>ປື້ມຄູ່ມືການຄຸ້ມຄອງໂຄງການ ໄດ້ຖືກປັບປຸງ ແຕ່ປື້ມຄູ່ມືສະເພາະຍັງບໍ່ທັນໄດ້ສະຫຼຸບເປັນສະບັບສຸດທ້າຍເທື່ອ.<br><br>ປື້ມຄູ່ມືການຄຸ້ມຄອງໂຄງການ ໄດ້ຖືກແຈກຢາຍໄປອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ໃນລະຫວ່າງການຝຶກອົບຮົມ ເດືອນພະຈິກ-ທັນວາ ທີ່ຜ່ານມານີ້.</td></tr>
<tr><td>4.3 ພະນັກງານກະຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະ ພະນັກງານແຜນການຫຼາຍກ່ວາ 5 ທ່ານຢູ່ແຕ່ລະແຂວງ ກະຊວງ ແລະ ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງສາມາດຄຸ້ມຄອງໂຄງການລົງທຶນລັດ ໃຫ້ສອດຄ່ອງກັບບັນດາປື້ມຄູ່ມືຕ່າງໆທີ່ໄດ້ຖືກພັດທະນາ ແລະ ຍົກລະດັບແລະສາມາດຝຶກຕໍ່ໃຫ້ບັນດາພະນັກງານຂັ້ນແຂວງ ແລະ ຂັ້ນເມືອງທີ່ກ່ຽວຂ້ອງ.</td><td>1) ໃນທ້າຍເດືອນມັງກອນ 2011 ການຈັດຝຶກ ອົບຮົມໄດ້ສຳເລັດລົງ ຈຳນວນພະນັກງານທີ່ໄດ້ຮັບການຝຶກອົບຮົມແມ່ນຢູ່ໃນຕາຕະລາງ ລຸ່ມນີ້.<br><br>2) ປື້ມຄູ່ມື ແລະເອກະສານການຝຶກອົບຮົມໄດ້ ຮັບການປັບປຸງ.<br><br>3)ຈະໄດ້ມີການປະເມີນຜົນການນຳໃຊ້ ໂດຍຜ່ານການຕິດຕາມການສ້າງແຜນການລົງທຶນລັດປະຈຳປີ 2011-12)<br><br><table><tr><th>ໂປຣແກມການຝຶກ</th><th>ຈຳນວນພະນັກງານທີ່ໄດ້ຮັບການຝຶກ</th></tr><tr><td>TOT ສຳລັບ ພຜທ ແຂວງ</td><td>103 ທ່ານ</td></tr><tr><td>TOTສຳລັບກະຊວງ</td><td>35 ທ່ານ</td></tr><tr><td>ການຝຶກອົບຮົມສຳ ລັບເຈົ້າຂອງໂຄງການ</td><td>811 ທ່ານ</td></tr><tr><td>ລວມ</td><td>949 ທ່ານ</td></tr></table></td></tr>
</table>

ດັ່ງທີ່ໄດ້ກ່າວໃນຕາຕະລາງຂ້າງເທິງ ລະດັບຜົນສະເລັດສຳລັບອົງປະກອບນີ້ແມ່ນສູງແລະຄາດວ່າຈະບັນລຸເປົ້າໝາຍຂອງມັນກ່ອນໂຄງການຈົບ. ວຽກງານທີ່ຍັງເຫຼືອແມ່ນການພັດທະນາປຶ້ມຄູ່ມືສະບັບສຸດທ້າຍ ແລະການຕິດຕາມຂັ້ນຕອນການສ້າງງົບປະມານເພື່ອກວດເບິ່ງວ່າໂຄງການທີ່ ໄດ້ຮຽກຮ້ອງທຶນສົມທົບຈາກລັດຖະບານໄດ້ຍື່ນສະເໜີທຶນສົມທົບໂດຍນຳໃຊ້ແບບຟອມສະປິດສ (SPIS) ຫຼືບໍ່

## (2) [ໝາກຜົນທີ 4-2] ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ

<u>ຕາຕະລາງສະແດງຜົນສຳເລັດຂອງໝາກຜົນທີ 4-2</u>

<table>
<tr><th>ໂຕຊີ້ວັດ</th><th>ຜົນສຳເລັດ</th></tr>
<tr><td>4-2 ປຶ້ມຄູ່ມືການຄຸ້ມຄອງໂຄງການແລະປຶ້ມຄູ່ມືສະເພາະ ແມ່ນໄດ້ຖືກພັດທະນາໃຫ້ກວມເອົາເນື້ອໃນກ່ຽວກັບການຄຸ້ມຄອງການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ. ບັນດາປຶ້ມຄູ່ມືດັ່ງກ່າວ ຖືກອະນຸມັດ ແລະແຈກຢາຍໃຫ້ທຸກອົບການຈັດຕັ້ງລັດທີ່ກ່ຽວຂ້ອງ.</td><td>ຟອມບົດສະເໜີໂຄງການ(ໂຄງການສະເໜີໃໝ່)ແລະໃບປະເມີນໂຄງການໄດ້ຖືກພັດທະນາຂຶ້ນສຳລັບໂຄງການລົງທຶນລັດຂັ້ນເມືອງແລະໄດ້ຖືກບັນຈຸລົງໃນປຶ້ມຄູ່ມືການຄຸ້ມຄອງໂຄງການລົງທຶນລັດ ພ້ອມກັນໄດ້ນຳສະເໜີຊ່ອງທາງການສະເໜີຂໍທຶນແລະແຫຼ່ງທຶນ ຕ່າງໆສຳລັບໂຄງການຂັ້ນເມືອງ(ກຸ່ມບ້ານພັດທະນາ) ລວມທັງແຫຼ່ງ ທຶນພາຍໃນແລະທຶນຊ່ວຍເຫຼືອຈາກຕ່າງປະເທດສຳລັບການພັດທະ ນາຊົນນະບົດ ແລະຫຼຸດຜ່ອນຄວາມທຸກຍາກ.<br><br>ໃນລະຫວ່າງການຝຶກອົບຮົມ ໄດ້ມີການປຶກສາຫາລື ລະຫວ່າງພະນັກງານຂັ້ນແຂວງ ກ່ຽວກັບວິທີການສະໜັບສະໜູນຊຸກຍູ້ເມືອງໃນການ ຄຸ້ມຄອງການລົງທຶນລັດ ເຊິ່ງເປັນພາກສ່ວນໜຶ່ງຂອງການຝຶກອົບຮົມ ນອກນັ້ນກໍ່ໄດ້ປຶກສາຫາລືກ່ຽວກັ ບັນດາຊ່ອງທາງສຳລັບສະເໜີຂໍໂຄງການລົງທຶນລັດໃນຂົງເຂດສະເພາະເປັນການໃຫ້ໂອກາດໃນການສຶກສາກ່ຽວກັບ ຈຸດພິເສດຂອງເມືອງໃນແຕ່ລະແຂວງ.</td></tr>
<tr><td>4.3 ພະນັກງານກະຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະພະນັກງານແຜນການຫຼາຍກ່ວາ 5 ທ່ານຢູ່ແຕ່ລະແຂວງ ກະຊວງແລະອົງການຈັດຕັ້ງລັດທີ່ກ່ຽວຂ້ອງສາມາດຄຸ້ມຄອງໂຄງການລົງທຶນລັດ ໃຫ້ສອດຄ່ອງກັບບັນດາປຶ້ມຄູ່ມືຕ່າງໆທີ່ໄດ້ຖືກພັດທະນາແລະຍົກລະດັບ ແລະສາມາດຝຶກຕໍ່ໃຫ້ບັນດາ</td><td>1)ການຝຶກອົບຮົມໄດ້ສຳເລັດ ລົງໃນທ້າຍເດືອນມັງກອນ 2011 ຈຳນວນພະນັກງານທີ່ເຂົ້າຮ່ວມຝຶກອົບຮົມແມ່ນສະແດງໃນຕາຕະ ລາງລຸ່ມນີ້:<br><br>2) ປຶ້ມຄູ່ມື ແລະເອກະສານການຝຶກອົບຮົມ ແມ່ນໄດ້ຖືກຍົກລະດັບ ຕາມອົງປະກອບຍ່ອຍນີ້:<br><br>ຈຳນວນພະນັກງານເຂົ້າຮ່ວມຝຶກອົບຮົມປີ 2010-11<br><table><tr><th>ໂປຣແກມການຝຶກອົບຮົມ</th><th>ຈຳນວນຜູ້ເຂົ້າຮ່ວມ</th></tr><tr><td>TOT ສຳລັບ ພຜທ</td><td>103 ທ່ານ</td></tr><tr><td>ສຳລັບເຈົ້າຂອງໂຄງການໃນ ບັນດາແຂວງ</td><td>811 ທ່ານ</td></tr></table></td></tr>
</table>

<table>
<tr><td>ພະນັກງານຂັ້ນແຂວງແລະ ຂັ້ນເມືອງທີ່ກ່ຽວຂ້ອງ.</td><td><table><tr><td>ລວມ</td><td>914 ທ່ານ</td></tr></table></td></tr>
</table>

ດັ່ງທີ່ໄດ້ກ່າວໃນຕາຕະລາງຂ້າງເທິງ ລະດັບຜົນສຳເລັດສຳລັບອົງປະກອບນີ້ແມ່ນສູງເຊັ່ນດຽວກັນກັນ ແລະຄາດວ່າຈະສາມາດບັນລຸເປົ້າໝາຍກ່ອນໂຄງການຈະສິ້ນສຸດ. ວຽກທີ່ຍັງ ເຫຼືອແມ່ນການຕິດຕາມຂັ້ນຕອນການສ້າງແຜນການສະເໜີຂໍງົບປະມານການລົງທຶນລັດປະຈຳ ປີທີ່ກຳລັງດຳເນີນຢູ່ ເພື່ອກວດເບິ່ງວ່າ ແບບຟອມສະເໜີໂຄງການສຳລັບຂັ້ນເມືອງໄດ້ຖືກນຳໃຊ້ ຫຼືບໍ່ ແລະໄດ້ຜ່ານຊ່ອງທາງທີ່ເໝາະສົມຫຼືບໍ່ ແບບຟອມ ແລະໃບປະເມີນໂຄງການສຳລັບກຸ່ມ ບ້ານພັດທະນາ (ຂັ້ນເມືອງຄຸ້ມຄອງ) ແມ່ນຕ້ອງໄດ້ສືບຕໍ່ຄົ້ນຄ້ວາກັບບັນດາ ໂຄງການຂອງຜູ້ໃຫ້ທຶນສຳລັບການນຳໃຊ້ທີ່ມີປະສິດຕິຜົນໃນຕໍ່ໜ້າ.

### 3.3.1 [ໝາກຜົນທີ 3-4] ການຄຸ້ມຄອງແຜນງານ

ຕາຕະລາງ ສະແດງຜົນສຳເລັດຂອງໝາກຜົນທີ 4-3

<table>
<tr><th>ໂຕຊີ້ວັດ</th><th>ຜົນສຳເລັດ</th></tr>
<tr><td>4.2 ປື້ມຄູ່ມືການຄຸ້ມຄອງແຜນງານ ໄດ້ຖືກຍົກລະດັບ, ອະນຸມັດ ແລະ ແຈກຢາຍໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງກັບການຄຸ້ມຄອງໂຄງ ການລົງທຶນລັດ.</td><td>ປື້ມຄູ່ມືການຄຸ້ມຄອງແຜນງານ ໄດ້ຖືກປັບປຸງ ເຊິ່ງໄດ້ລວມເອົາເຄື່ອງມືຂອງໂປຣແກມ ແລະ ສິ່ງທ້າທາຍໃນການຄຸ້ມຄອງແຜນງານເຂົ້ານຳ</td></tr>
<tr><td>4.3 ພະນັກງານກະຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະ ພະນັກງານແຜນການຫຼາຍກ່ວາ 5 ທ່ານຢູ່ແຕ່ລະແຂວງ ກະຊວງ ແລະອົງການຈັດຕັ້ງລັດທີ່ກ່ຽວຂ້ອງສາມາດຄຸ້ມຄອງໂຄງການລົງທຶນລັດ ໃຫ້ສອດຄ່ອງກັບບັນດາປື້ມຄູ່ມືຕ່າງໆທີ່ໄດ້ຖືກພັດທະນາແລະຍົກລະດັບ ແລະສາມາດຝຶກຕໍ່ໃຫ້ບັນດາພະນັກງານຂັ້ນແຂວງແລະຂັ້ນເມືອງທີ່ກ່ຽວຂ້ອງ.</td><td>1) ໃນທ້າຍເດືອນມັງກອນ 2011 ການຈັດຝຶກ ອົບຮົມໄດ້ສຳເລັດລົງ ຈຳນວນພະນັກງານທີ່ໄດ້ຮັບການຝຶກອົບຮົມແມ່ນຢູ່ໃນຕາຕະລາງລຸ່ມນີ້.<br>2) ປື້ມຄູ່ມື ແລະເອກະສານການຝຶກອົບຮົມໄດ້ ຮັບການປັບປຸງ.<br>3)ຈະໄດ້ມີການປະເມີນຜົນການນຳໃຊ້ໂດຍຜ່ານການຕິດຕາມການສ້າງແຜນການລົງທຶນລັດປະຈຳປີ 2011-12)<table>
<tr><th>ໂປຣແກມການຝຶກ</th><th>ຈຳນວນພະນັກງານທີ່ໄດ້ຮັບການຝຶກ</th></tr>
<tr><td>TOT ສຳລັບ ພຜທ ແຂວງ</td><td>103 ທ່ານ</td></tr>
<tr><td>TOTສຳລັບກະຊວງ</td><td>35 ທ່ານ</td></tr>
<tr><td>ການຝຶກອົບຮົມສຳ ລັບເຈົ້າຂອງໂຄງ ການ</td><td>811 ທ່ານ</td></tr>
<tr><td>ລວມ</td><td>949 ທ່ານ</td></tr>
</table></td></tr>
</table>

